ສະມາຄົມອະດີດ ນັກສຶກສາລາວ ຈາກຍີ່ປຸ່ນ
JAOL Japan Alumni Of Laos
ラオス元日本留学生会

ສະບັບທີ4 ມີນາ 2008

ຈົດໝາຍຂ່າວ - Newsletter

ຫົວຂ່າວປະຈໍາສະບັບ

# JAOL ແລະ ການບໍລິຫານ

ພິມ ວັນທີ25ມີນາ2008

## ເນື້ອໃນເດັ່ນໃນສະບັບນີ້

ການພັດທະນາເວັບໄຊ (p2)

ວຽກງານສໍານະນາ (p2)

ກິລາ ແລະການພົບປະ (p3)

ການຮ່ວມກິດຈະກໍາ ກັບ ສະມາຄົມຄົນຍີ່ປຸ່ນ (p4)

ການບໍລິຫານ JICafe (p4)

ການແຂ່ງຂັນເວົ້າພາສາຍີ່ປຸ່ນ (p5)

ການຮ່ວມReunion ຢູ່ຍີ່ປຸ່ນ (p5)

ທຶນການສຶກສາຕໍ່ຢູ່ຍີ່ປຸ່ນ (p6)

ບົດຄວາມຈາກສະມາຊິກ (p7, p9)

ບົດແນະນໍາສະມາຊິກ (p7, p11)

## ຄະນະບໍລິຫານຊຸດທີ2 ໃກ້ຈົບວາລະການເຮັດວຽກ 2ປີແລ້ວ

ຄະນະບໍລິຫານຊຸດທີ2 ທີ່ນໍາທີມໂດຍປະທານປາລິນາ ເພັດສີວິແສງ ໄດ້ເຂົ້າມາເຮັດວຽກບໍລິຫານ ພາຍຫລັງໄດ້ມີກອງປະຊຸມໃຫຍ່ຂອງສະມາຄົມ ປະຈໍາປີ2006 ຄັ້ງວັນທີ11/06/2006. ໃນຄັ້ງນັ້ນກໍ່ໄດ້ມີການເລືອກຕັ້ງພາຍໃນ ໂດຍມີຜູ່ສະມັກ14ທ່ານ ຄັດເອົາ7ທ່ານ, ເຊິ່ງເປັນບັນຍາກາດອັນໜຶ່ງ ທີ່ພາໃຫ້ຄິດທອນຄືນເຖິງການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຄັ້ງວັນທີ30/04/2006.

ການເຂົ້າມາບໍລິຫານ ໃກ້ຄົບວາລະການເຮັດວຽກ 2ປີແລ້ວ, ກໍ່ໝາຍຄວາມວ່າ ໃນກອງປະຊຸມໃຫຍ່ປະຈໍາປີ 2008ນີ້ ຈະມີການຈັດການເລືອກຕັ້ງຄະນະບໍລິຫານຊຸດທີ3ຊຸດໃໝ່ຂຶ້ນ. ດ້ວຍເຫດນີ້ ຈຶ່ງຂໍສະເໜີມາລ່ວງໜ້າ ໃຫ້ສະມາຊິກທຸກຄົນ ໄດ້ມີເວລາຄົ້ນຄິດ ກ່ຽວກັບຄະນະບໍລິຫານໃນຊຸດຕໍ່ໄປວ່າ 1.) ຕົນເອງຈະລົງສະມັກ ແລະມີຄວາມຄິດໃນການບໍລິຫານແບບນີ້ແບບນັ້ນ 2.) ຢາກສະເໜີ ຜູ່ສະມັກຜູ່ນັ້ນຜູ່ນີ້ ເພາະລາວມີແນວຄິດຈັ່ງຊີ້ຈັ່ງຊັ້ນ 3.) ຂໍ້ສະເໜີຂໍ້ແນະນໍາ ຕໍ່ຄະນະບໍລິຫານຊຸດໃໝ່ ແລະອື່ນໆ.

ເພື່ອເປັນການສະຫລຸບ ແລະລາຍງານວຽກງານ ທີ່ໄດ້ປະຕິບັດນໍາກັນມາ ໃນໄລຍະເວລາ2ປີທີ່ຜ່ານມາຂອງຄະນະບໍລິຫານຊຸດທີ2, ຂໍສັງລວມໄວ້ເປັນຂໍ້ ດັ່ງຕໍ່ໄປນີ້.

(ອ່ານຕໍ່ໜ້າ 10)

## ການກະກຽມຂໍອະນຸຍາດເຂົ້າ ASCOJA

ASCOJA ແມ່ນຫຍໍ້ມາຈາກ ASEAN COUNCIL OF JAPAN ALUMNI (ສະພາສະມາຄົມອະດີດນັກສຶກສາອາຊຽນຈາກປະເທດຍີ່ປຸ່ນ), ເປັນສະພາກອງປະຊຸມຂອງສະມາຄົມອະດີດນັກສຶກສາຈາກປະເທດຍີ່ປຸ່ນ ຈາກບັນດາປະເທດອາຊຽນ ເພື່ອການຮ່ວມມື ທັງລະຫວ່າງບັນດາສະມາຊິກດ້ວຍກັນ ແລະລະຫວ່າງອາຊຽນກັບປະເທດຍີ່ປຸ່ນ. ຢູ່ທີ່ນີ້, ຢາກຂໍລາຍງານກ່ຽວກັບASCOJA ໂດຍສັງເຂບ ແລະສະຫລຸບວ່າການກະກຽມ ເປັນຈັ່ງໃດຮອດໃສແລ້ວ.



ຮູບຖ່າຍນີ້ ແມ່ນຖ່າຍໃນກອງປະຊຸມ ASCOJA ເດືອນ9ປີ2007 ຢູ່ທີ່ປະເທດອິນໂດເນເຊຍ, ກ່ອນທີ່ທ່ານຟຸກຸດະ-ຍະຊຸໂອະ ຈະໄດ້ຮັບການຄັດເລືອກໃຫ້ເປັນນາຍົກລັດຖະມົນຕີຍີ່ປຸ່ນ ປະມານ3ອາທິດ.

ໃນປັດຈຸບັນນີ້, ສະມາຊິກຂອງ ASCOJA ແມ່ນມີຢູ່9ປະເທດ ເຊິ່ງໃນບັນດາປະເທດອາຊຽນ ຍັງເຫລືອພຽງແຕ່ສະມາຄົມຈາກລາວເຮົາ ທີ່ຍັງບໍ່ໄດ້ເຂົ້າເປັນສະມາຊິກ. ASCOJA ໄດ້ຖືກສ້າງຕັ້ງຂຶ້ນແຕ່ປີ1977, ເລີ່ມຕົ້ນ ມີ5ປະເທດເປັນສະມາຊິກເຊັ່ນ: ອິນໂດເນເຊຍ, ມາເລເຊຍ, ຟິລິບປິນ, ສິງກະໂປ ແລະໄທ. ສ່ວນປະເທດບຣູນາຍ ແມ່ນເຂົ້າເປັນສະມາຊິກຂອງສະພາ ພາຍຫລັງປະເທດບຣູນາຍເຂົ້າເປັນສະມາຊິກຂອງອາຊຽນ. ໃນໄລຍະຫລັງນີ້ ກໍ່ແມ່ນສະມາຄົມອະດີດນັກສຶກສາຂອງປະເທດກໍາປູເຈຍ ແລະຫວຽດນາມ ເຂົ້າເປັນສະມາຊິກໃນປີ2006.

ຮູບການຈັດຕັ້ງຂອງ ASCOJA ແມ່ນຖືເອົາປະທານສະມາຄົມອະດີດນັກສຶກສາຈາກປະເທດຍີ່ປຸ່ນຂອງປະເທດໃດໜຶ່ງ ເປັນປະທານຂອງສະພາ ASCOJA, ແລະດໍາລົງຕໍາແໜ່ງດັ່ງກ່າວເປັນເວລາ2ປີ. ສະພາຈະຈັດກອງປະຊຸມໃຫຍ່ຂຶ້ນໃນທຸກໆ2ປີ. ການເຄື່ອນໄຫວຂອງສະພາໄດ້ຮັບການສະໜັບສະໜູນ ຈາກລັດຖະບານປະເທດຍີ່ປຸ່ນ ໂດຍຜ່ານອົງການ ASJA (Asia Japan Alumni) ຂຶ້ນກັບກະຊວງການຕ່າງປະເທດຍີ່ປຸ່ນ ແລະອົງການ JASSO (Japan Student Service Organization) ຂຶ້ນກັບກະຊວງສຶກສາປະເທດຍີ່ປຸ່ນ.

(ອ່ານຕໍ່ໜ້າ 11)

http://asia.geocities.com/jaolweb/

ຫນ້າຕາຂອງເວັບໄຊສະມາຄົມ




# ການພັດທະນາເວັບໄຊຂອງສະມາຄົມ

ເວັບໄຊຂອງສະມາຄົມ ເປັນເລື່ອງທີ່ຖືກຍົກຂຶ້ນມາເວົ້າຫລາຍເທື່ອຫລາຍທີຫລາຍປີມາແລ້ວ, ແຕ່ກໍ່ບໍ່ເກີດຈັກເທື່ອ. ຫລັງຈາກກອງປະຊຸມໃຫຍ່ປີ2007 ໄດ້ມີການຮຽກຮ້ອງ ໃຫ້ສະມາຊິກມີສ່ວນຮ່ວມຫລາຍຂຶ້ນ, ຫລັງຈາກນັ້ນ ກໍ່ໄດ້ມີການຈັດຕັ້ງຫລາຍໆທີມງານສະເພາະກິດ ເພື່ອດຳເນີນກິດຈະກຳຂອງສະມາຄົມ. ໃນນັ້ນ, ກໍ່ມີທີມງານເວັບໄຊ ໂດຍມີສະມາຊິກ ດັ່ງລຸ່ມນີ້:

- ວັນທະກອນ ເດດວົງສາ (ກອນ)
- ບັນດາໄຊ ລໍວັນໄຊ (ບັນດາ)
- ຄຳສະໄຫວ ສີປະເສີດ (ເອ໋)
- ແສງອາທິດ ຈັນງາຄຳ (ແສງ)
- ເພັດມະນີວອນ ທັດຕະມະນີວົງ (ປີປີ່)
- ທ່ຽງພະຈັນແຮມ ສີສະຫວັດ (ທ່ຽງ)
- ວິໄລສັກ ສຸລິຈັນ (ສັກ)
- ລຳພູນ ມູນພູມີ (ຕຸ້ຍ)
- ສຸລັດຖາ ໄຊຍະລາດ (ເບ)
- ມິດທະວິສຸກ ວັດຕະນະ (ມິດ)
- ວັດທະນາມີໄຊ ຈັນຊົມພູ (ຕູ່)

ແລະອີກຫລາຍໆຄົນ. ໂດຍມີພາກສ່ວນ ທີ່ເປັນວິຊາການໃນການສ້າງເວັບ ແລະຂຽນໂປຣແກຣມ, ມີພາກສ່ວນເກັບກຳຂໍ້ມູນ-ຈັດຫາເນື້ອໃນ ແລະອື່ນໆ. ເນື້ອໃນທີ່ເອົາລົງໄປໃນເວັບໄຊ ແລະການອອກແບບ ຫນ້າຕາສີສັນຂອງເວັບໄຊ ກໍ່ໄດ້ມີການສອບຖາມ ຄວາມຄິດເຫັນ ແລະຜ່ານສະມາຊິກນຳກັນ.

ໂດຍລວມ ແມ່ນພວກເຮົາເຮັດສຳເລັດແລ້ວ ໃນຂັ້ນໃດຫນຶ່ງ, ຍ້ອງກັນໄດ້ ແຕ່ຫ້າມຕຳນິກັນເດີ!! ສ່ວນສິ່ງທີ່ທີມງານພວກເຮົາຄິດວ່າຕ້ອງໄດ້ປັບປຸງແກ້ໄຂ ໃນຂັ້ນຕໍ່ໄປກໍ່ຄື "ການບໍລິຫານເວັບໄຊ" ຫມາຍເຖິງ ການອັບເດດຂໍ້ມູນ ລວມໄປເຖິງການໄປເກັບກຳຂໍ້ມູນຂ່າວສານ ທີ່ຈະເອົາມາລົງ ວ່າຄວນມີລະບົບກົນໄກແນວໃດ ແບ່ງວຽກກັນແນວໃດ, ອັນທີສອງ ກໍ່ແມ່ນເຊີບເວີທີ່ຈະໄປຝາກຂໍ້ມູນ ເຊິ່ງປະຈຸບັນແມ່ນນຳໃຊ້ຂອງໄດ້ລ້າຂອງຟຣີຢູ່, ແຕ່ຕໍ່ໄປ ກໍ່ຄິດວ່າຈະໄດ້ຊອກຫາເຊີບເວີທີ່ຄັກແນ່ມາໃຊ້ (ເວົ້າໃຫ້ກັນຮູ້ແຕ່ຢູ່ນີ້ຊື່ໆ ດຽວນີ້ກຳລັງຕິດຕໍ່ກັບ ລທລ ຢູ່ເດີ!!!). ພ້ອມດຽວກັນ, ກໍ່ຂໍຝາກຄວາມຂອບໃຈມາຍັງຄະນະອຳນວຍການບໍລິສັດ BELAO ທີ່ໄດ້ອຳນວຍຄວາມສະດວກທັງທາງດ້ານອຸປະກອນ, ສະຖານທີ່ ແລະອື່ນໆອີກ ໃນຂະນະທີ່ເຮັດກິດຈະກຳດັ່ງກ່າວນີ້.

# ວຽກງານສຳມະນາ




ພະນະທ່ານມິຍະຊິຕະ ມະຊະອະກິ ຂຶ້ນກ່າວຄຳປາໄສ ເປີດສຳມະນາ

ໃນໄລຍະທີ່ຜ່ານມາ, ສະມາຄົມພວກເຮົາໄດ້ມີການປະກອບສ່ວນຈັດສຳມະນາ ມາຢ່າງຕໍ່ເນື່ອງ. ໂດຍມີ 2ງານຕົ້ນຕໍດັ່ງນີ້.

1) ງານສຳມະນາມິດຕະພາບລາວ-ຍີ່ປຸ່ນ ເຊິ່ງວ່າ ສະຖານທູດຍີ່ປຸ່ນເປັນຜູ້ຈັດຕັ້ງຫລັກ ໂດຍມີການ-ຮ່ວມມືຂອງສະມາຄົມ ແລະສູນລາວ-ຍີ່ປຸ່ນ. ງານນີ້ຈະໄດ້ຈັດປະຈຳທຸກໆປີ ໃນໄລຍະທ້າຍເດືອນ2.

ໂດຍສະມາຄົມຈະປະກອບສ່ວນ ໃນຮູບແບບຂອງການຈັດຫາສະມາຊິກມາເປັນຜູ້ສະເຫນີ ໃນຫົວຂໍ້ຕ່າງໆ. ສຳລັບປີ2008ນີ້ ກໍ່ຫາກໍ່ແລ້ວໄປ ແລະໄດ້ຮັບຜົນສຳເລັດຢ່າງຈົບງາມ, ເຊິ່ງແມ່ນ ດຣ. ພູເພັດ ກ້ຽວພິລາວົງ ສັງກັດມະຫາວິທະຍາໄລແຫ່ງຊາດ ໄດ້ສະເຫນີໃນເລື່ອງ "ບຶງທາດຫລວງ ມີຜົນປະໂຫຍດຫລາຍປານໃດ ຕໍ່ປະຊາຊົນນະຄອນຫລວງວຽງຈັນ" ເຊິ່ງເປັນການປະເມີນດ້ານເສດຖະກິດ ບຶງດັ່ງກ່າວ ແລະ ທ່ານສຸພະໄຊ ກໍມະນີ ສັງກັດອົງການຊັບພະຍາກອນນ້ຳ ແລະສິ່ງແວດລ້ອມ ໄດ້ສະເຫນີໃນເລື່ອງ "ການບໍລິຫານນ້ຳ ແບບປະສົມປະສານ ໃນ ສປປ ລາວ". ນອກຈາກສະມາຊິກສະມາຄົມ 2ທ່ານແລ້ວ, ຜູ້ທີ3 ແມ່ນຊ່ຽວຊານໄຈກ້າປະຈຳໂຄງການ (ອ່ານຕໍ່ຫນ້າ8)



ດຣ. ພູເພັດ ກ້ຽວພິລາວົງ

# ກິລາ ແລະການພົບປະ



ຫລິ້ນໂບລິ້ງລະຫວ່າງສະມາຊິກ
(ຈັບໄບເຮັດຫຍັງມາ, ຜູ້ຢູ່ຫລັງໂຕຄືເຮັດໜ້າຮ້າຍແທ້!)

ສະມາຊິກ ທີມເຕະບານຂອງສະມາຄົມ (ຍັງຕ້ອງການຜູ້ສົນໃຈມາຮ່ວມທີມຢູ່ເດີ..!!)








ສາວໆJAOL ຢູ່ທີ່ງານກິລາກັບສະມາຄົມຄົນຍີ່ປຸ່ນ

ງານກິນລ້ຽງຕ້ອນຮັບປີໃໝ່2008
ຢູ່ທີ່ບ້ານຂອງອາແລວ





ບັນຍາກາດຂອງການປະຊຸມເພື່ອກະກຽມ ກອງປະຊຸມໃຫຍ່ປະຈຳປີ2007



ດາໄຊ ຮັບລາງວັນທີໜຶ່ງ
ໃນການແຂ່ງຂັນໂບລິ້ງ
ຈາກປະທານສະມາຄົມຄົນຍີ່ປຸ່ນ

# ການຮ່ວມກິດຈະກໍາກັບສະມາຄົມຄົນຍີ່ປຸ່ນ

ສະມາຄົມຄົນຍີ່ປຸ່ນຢູ່ລາວ ມີສະມາຊິກຢູ່ປະມານ 300ຄົນ, ໃນນັ້ນ ມີພະນັກງານສະຖານທູດ, ພະນັກງານສັງກັດ JICA ທັງຜູ່ຢູ່ຫ້ອງການ ແລະ ຜູ່ປະຈໍາໂຄງການຕ່າງໆ, ພະນັກງານຂອງບັນດາຫົວໜ່ວຍທຸລະກິດເອກະຊົນຂອງຍີ່ປຸ່ນ, ພະນັກງານອົງການNGOຂອງຍີ່ປຸ່ນ ແລະບັນດາບຸກຄົນທີ່ເຂົ້າມາຢູ່ລາວດ້ວຍຫລາຍໆສາເຫດ ແຕກຕ່າງກັນໄປ. ໃນໄລຍະທີ່ຜ່ານມາ, ທັງ2ສະມາຄົມ ໄດ້ ມີການເຄື່ອນໄຫວກິດຈະກໍາຮ່ວມກັນເຊັ່ນ:

1) ອຸນໂດໄກ (ງານກິລາ) ປະມານເດືອນ2
2) ໂບລິ້ງໄທໄກ (ງານແຂ່ງໂບລິ້ງ) ປະມານເດືອນ9



ບັນຍາກາດຂອງງານກິລາ (ເປັນຂາເຊຍຊື່ງ ກະເອົາແທ້ເອົາວ່າເບາະ!!)

ການສ້າງກິດຈະກໍາຮ່ວມດັ່ງກ່າວ ເປັນການສ້າງໂອກາດ ໃຫ້ທັງ2ພາກສ່ວນ ໄດ້ມີໂອກາດ ໃນການແລກປ່ຽນຄໍາຄິດເຫັນ ແລກປ່ຽນວັດທະນະທໍາ ເຊິ່ງເປັນການເສີມສ້າງຄວາມເຂົ້າໃຈເຊິ່ງກັນແລະກັນ. ທັງ2ງານນີ້ ນອກຈາກຄອບຄົວຄົນຍີ່ປຸ່ນແລ້ວ ຍັງມີພະນັກງານຄົນລາວ ທີ່ເຮັດວຽກກັບອົງກອນ ຫລືກັບຄົນຍີ່ປຸ່ນເຂົ້າຮ່ວມນໍາອີກ. ຖືວ່າເປັນໂອກາດອັນດີ ທີ່ຈະໄດ້ພົບກັບຫລາຍໆພາກສ່ວນ ແລະກໍ່ເປັນໂອກາດອັນໜຶ່ງ ທີ່ສະມາຊິກສະມາຄົມຂອງພວກເຮົາເອງ ຈະໄດ້ມາພົບໜ້າພໍ້ຕາກັນ. ອຸນໂດໄກ ທີ່ຫາກໍ່ຈົບໄປ ໃນເດືອນ2ປີ2008ນີ້, ສໍາລັບສະມາຄົມເຮົາແລ້ວ ເຫັນວ່າບັນຍາກາດ ຂ້ອນຂ້າງງຽບເຫງົາ, ນີ້ກໍ່ຂຶ້ນກັບການປະສານງານຈາກຝ່າຍຍີ່ປຸ່ນແດ່ ຂຶ້ນກັບການເຂົ້າຮ່ວມຂອງຝ່າຍເຮົາໜ້ອຍແດ່. ແຕ່ເຖິງຢ່າງໃດກໍ່ຕາມ, ສໍາລັບປີໜ້າປີ2009, ພາຍໃນສະມາຄົມພວກເຮົາເອງ ກໍ່ຄວນລົມກັນຕື່ມ ວ່າຄວນຈະເຂົ້າຮ່ວມໃນລັກສະນະໃດ? ຄວນປະກອບສ່ວນຫຍັງແດ່? ແລະອື່ນໆ.

---

ເປັນຫຍັງ? ສະມາຄົມຈິ່ງຕ້ອງມາບໍລິຫານ JICafe. ຄິດວ່ານີ້ເປັນສິ່ງທີ່ສະມາຊິກທຸກຄົນຢາກຖາມ!?




## ການບໍລິຫານJICafe, ຄວາມທ້າທາຍ ແລະ ຄວາມຄາດຫວັງ

JICafeຖືກສ້າງຂຶ້ນ ເພື່ອໃຫ້ເປັນແຫລ່ງສະໜອງຂໍ້ມູນພື້ນຖານກ່ຽວກັບລາວ ໃຫ້ກັບພາກສ່ວນຕ່າງໆຂອງຍີ່ປຸ່ນເຊັ່ນ NGO, ອາສາສະມັກອື່ນໆ ທີ່ສົນໃຈເຂົ້າມາເຮັດວຽກໃນລາວ ແລະທັງເປັນບ່ອນສະໜອງຂໍ້ມູນເຜີຍແຜ່ກິດຈະກໍາຕ່າງໆຂອງບັນດາໂຄງການ ບັນດາNGOຂອງຍີ່ປຸ່ນ ໃຫ້ແກ່ຄົນລາວໄດ້ເຂົ້າໃຈ. ນອກຈາກເປັນແຫລ່ງຂໍ້ມູນແລ້ວ, ຍັງບໍລິການ ໃຫ້ເຊົ່າສະຖານທີ່ປະຊຸມ ແລະບໍລິການເຄື່ອງດື່ມ.

ໃນປີທໍາອິດປີ2006 ແມ່ນມີຜູ້ປະສານງານຄົນຍີ່ປຸ່ນຜູ້ໜຶ່ງ ທີ່ເຄີຍເປັນພະນັກງານNGOຍີ່ປຸ່ນ ບວກກັບຜູ້ຊ່ວຍ ແລະແມ່ບ້ານ. ໃນປີທີ2 ປີ2007, ອົງການໄຈກ້າໄດ້ສະເໜີໃຫ້ ສະມາຄົມເຂົ້າມາບໍລິຫານ ໂດຍກໍານົດງົບປະມານໃນການບໍລິຫານໃຫ້ ແລະງົບປະມານສ່ວນໜຶ່ງ ທີ່ຄິດໄລ່ເປັນເປີເຊັນ ຈະເຂົ້າເປັນຂອງສະມາຄົມເພື່ອສະມາຄົມ ຈະໄດ້ນໍາໃຊ້ ໃນກິດຈະກໍາຕ່າງໆ ທີ່ເປັນການປະກອບສ່ວນໃຫ້ແກ່ສັງຄົມ.

ຜ່ານການບໍລິຫານເປັນເວລາ 1ປີ, ຜູ້ປະສານງານ(ນົກ) ກໍ່ໄດ້ໃຫ້ຄໍາເຫັນວ່າ "ເປັນຄວາມທ້າທາຍອັນໜຶ່ງທີ່ໄດ້ຮ່ວມງານກັບຄົນຍີ່ປຸ່ນ, ເຮັດແນວໃດ ໃຫ້ເຂົາເຈົ້າຍອມຮັບໄດ້ ໃນການບໍລິຫານຂອງຄົນລາວເຮົາ. ການບໍລິຫານໄດ້ເນັ້ນຢູ່ການເຮັດໜ້າທີ່ເປັນຂົວຕໍ່ລະຫວ່າງລາວ ແລະ ຍີ່ປຸ່ນ, ພະຍາຍາມໃຫ້ທັງສອງຝ່າຍໄດ້ເຂົ້າມານໍາໃຊ້JICafe ຢ່າງມີຄຸນປະໂຫຍດສູງສຸດ".

ສໍາລັບສະມາຄົມພວກເຮົາແລ້ວ, ຄວາມທ້າທາຍ ກໍ່ແມ່ນ ຄວາມຮັບຜິດຊອບນັ້ນເອງ, ເຮັດແນວໃດຈະບໍລິຫານໃຫ້ໄດ້ຕາມງົບປະມານທີ່ໄດ້ຮັບມາ, ເຊິ່ງນອກຈາກການຊອກຫາພະນັກງານມາເຮັດວຽກ ແລະຕໍ່ລອງເງິນເດືອນຕ່າງໆແລ້ວ, ຍັງຕ້ອງເບິ່ງແນວທາງໃນການບໍລິຫານ ເພື່ອໃຫ້ທັງສອງຝ່າຍ ໄດ້ຮັບຜົນປະໂຫຍດສູງສຸດ. ສ່ວນສິ່ງທີ່ສະມາຄົມຄາດຫວັງຈະໄດ້ຮັບ ນອກຈາກງົບປະມານສ່ວນໜຶ່ງແລ້ວ, ກໍ່ແມ່ນການໂຄສະນາ ສະມາຄົມເຮົາ ໃຫ້ສັງຄົມໄດ້ຮູ້ຈັກ ພ້ອມທັງອາໄສ JICafe ເປັນບ່ອນພົບປະກັນລະຫວ່າງສະມາຊິກເພາະທີ່ຕັ້ງທໍາເລ ກໍ່ເປັນບ່ອນທີ່ສະດວກ ແກ່ການນັດພົບກັນ.



ນ້ອງສາວ"ນົກ"ຜູ້ປະສານງານປະຈໍາ JICafe ແລະໝູ່ເພື່ອນມາຊ່ວຍວຽກ

## ການແຂ່ງຂັນເວົ້າພາສາຍີ່ປຸ່ນ



ໄຊຊະນະ ກຳລັງກວດເບິ່ງຄວາມຮຽບຮ້ອຍ ຂອງເວທີ

ການແຂ່ງຂັນເວົ້າພາສາຍີ່ປຸ່ນ ແມ່ນໄດ້ຈັດມາເປັນເວລາຫລາຍປີແລ້ວ, ໂດຍ ສະມາຄົມພວກເຮົາ ເປັນຫນຶ່ງໃນຄະນະກຳມະການ ຈັດງານການແຂ່ງຂັນ, ເຊິ່ງຄັ້ງຫລ້າສຸດ ແມ່ນຄັ້ງທີ5 ເຊິ່ງຫາກໍ່ຈົບໄປວ່າງວັນທີ22/03/2008ນີ້ເອງ. ຕ້ອງຂໍໂທດຫລາຍໆ ທີບໍ່ສາມາດ ນຳເອົາຮູບຖ່າຍຕ່າງໆຂອງງານ ມາສະເຫນີໃຫ້ເບິ່ງໄດ້ ເພາະເວລາກໍ່ຈໍ້ແນ່, ຫວັງວ່າ ໃນສະບັບຫນ້າ ຈະໄດ້ລົງໃຫ້ເປັນພິເສດເລີຍເນາະ, ສ່ວນສະບັບນີ້, ຂໍພຽງແຕ່ຝາກຄວາມຊົມເຊີຍມາຍັງ "ບັນດາໄຊ" ທີ່ໄດ້ປະສານງານກັບຝ່າຍຍີ່ປຸ່ນມາເປັນເວລາຫລາຍດືອນ ແລະສະແດງຜີມືໄດ້ສຸດຍອດໃນມື້ແຂ່ງຂັນຈິງ. ພ້ອມດ້ວຍຫມູ່ຄະນະເຊັ່ນ: ຄູ່ພິທີກອນ "ດາລີລັກ" ກັບ "ດາໄຊ", ຜູ້ຄຸມເວທີ "ໄຊຊະນະ" ແລະ ຜູ້ຊ່ວຍຄຸມເຄື່ອງສາຍ "ສາລີພອນ"; ແລະຂາດບໍ່ໄດ້ແມ່ນປະທານ ປາລີມາ ທີ່ໄດ້ເປັນຜູ້ຫນຶ່ງ ໃນຄະນະກຳມະການຕັດສິນຜົນການແຂ່ງຂັນ.

ຜູ້ເຂົ້າຮ່ວມແຂ່ງຂັນ ແມ່ນນັກຮຽນທີ່ຮຽນພາສາຍີ່ປຸ່ນ ຢູ່ຕາມໂຮງຮຽນຕ່າງໆ ເຊັ່ນ: ສູນຮ່ວມມືລາວ-ຍີ່ປຸ່ນ ມຊ, ພະແນກພາສາຍີ່ປຸ່ນ ມຊ, ສູນພາສາຍີ່ປຸ່ນສີຫອມວິທະຍາ, ສູນພາສາຍີ່ປຸ່ນຈຳປາ ແລະອື່ນໆອີກ. ນອກຈາກການແຂ່ງຂັນເວົ້າພາສາຍີ່ປຸ່ນແລ້ວ ຍັງມີການສະແດງຕ່າງໆຂອງບັນດາສະຖາບັນດັ່ງກ່າວມາຂ້າງເທິງ; ຕາມການລາຍງານຂອງສະຫາຍ ບັນດາໄຊ, ເວລາເຂົ້າຮ່ວມກອງປະຊຸມຂອງຄະນະກຳມະການຈັດງານ ກໍ່ມີຫລາຍພາກສ່ວນໄດ້ສະເຫນີໃຫ້ທາງສະມາຄົມພວກເຮົາ ສະແດງລາຍການໃດຫນຶ່ງ ໃນການແຂ່ງຂັນຄັ້ງທີ6 ທີ່ຈະຈັດຂຶ້ນປະມານເດືອນ3ປີ2009 (ຊິເຮັດຫຍັງ ຊິສະແດງຫຍັງ ກໍ່ຄິດໄວ້ຊ່ວຍກັນແນ່ເດີ..). ໃນປະຈຸບັນ, ການແຂ່ງຂັນແມ່ນມີຢູ່ 2ພາກສ່ວນ A ແລະ B ແທນໃຫ້ລະດັບຕົ້ນ ແລະລະດັບກາງ, ສ່ວນການລົງສະຫມັກແຂ່ງເວົ້າ ກໍ່ຍັງມີຂໍ້ຈຳກັດຫລາຍຢູ່, ເຮັດໃຫ້ສະມາຊິກພວກເຮົາ ບໍ່ສາມາດລົງແຂ່ງນຳໄດ້. ແຕ່ວ່າໃນອະນາຄົດ, ຖ້າພວກເຮົາສະເຫນີ ອາດເປັນໄປໄດ້ ທີ່ຈະໃຫ້ມີໃນລະດັບສູງ ທີ່ໃຜໆກໍ່ລົງສະຫມັກໄດ້ ໂດຍບໍ່ມີເງື່ອນໄຂ..ແມ່ນບໍ່?

## ການເຂົ້າຮ່ວມໂປຣແກຣມ Tsudoi

ງານ"ຊຶໂດຍ" ຫລືເອີ້ນໃນພາສາອັງກິດວ່າ Reunion ນັ້ນ, ແມ່ນທາງກະຊວງການຕ່າງປະເທດຂອງຍີ່ປຸ່ນ ເປັນຜູ້ຈັດຕັ້ງຂຶ້ນ ໃນແຕ່ລະປີ, ໂດຍການເຊື້ອເຊີນ ອະດີດນັກສຶກສາ ຂອງບັນດາປະເທດອາຊຽນ+ຈີນ ມາພົບປະກັນ, ໂດຍມີງານສຳມະນາ ແລະການທັດສະນະສຶກສາ ເພື່ອໃຫ້ກຳໄດ້ ສະພາບການຂອງປະເທດຍີ່ປຸ່ນ ທີ່ປ່ຽນແປງໄປທຸກໆມື້. ພ້ອມທັງເປີດໂອກາດໃຫ້ໄດ້ໄປຢ້ຽມຢາມມະຫາວິທະຍາໄລເກົ່າ ຫລືອາຈານເກົ່າຂອງຕົນເອງ ເພື່ອສານຕໍ່ສາຍພົວພັນ ກັບຄູອາຈານ ກໍ່ຄືສະຖາບັນ ທີ່ຕົນໄດ້ຈົບອອກມາ. ພວກເຮົາເລີ່ມເຂົ້າຮ່ວມຕັ້ງແຕ່ປີ2001 ຈົນມາເຖິງປັດຈຸບັນ ໂດຍມີລາຍຊື່ ດັ່ງຕໍ່ໄປນີ້:



ງານລ້ຽງຕ້ອນຮັບ, ໂດຍມີທູດແຕ່ລະປະເທດເຂົ້າຮ່ວມນຳ

2001: ທອງວັນ ເທບໄກສອນ, ອາມອນ ສີຫາວົງ, ບຸນເລື່ອມ ໂສດາຮັກ;
2002: ຄຳມ່ວນ ຊົມສີຫາປັນຍາ, ບຸນທົງ ກົງມະນີຈັນ,
ຈັນສະໄຫມ ສຸວັນ-ລາສີ;
2003: ພອນແກ້ວ ຈັນທະມາລີ, ສີວຽງໄຊ ອໍລະບູນ, ວັນທາ ແສງເມືອງ,
ດວງມາລາ ກຸນຊະນະ;
2004: ພູເພັດ ກ້ຽວພິລາວົງ, ບົວສອນ ວົງຖາວອນ, ວິໄລສັກ ຈົ່ງປະເສີດ
2005: ເກດແກ້ວ ພວງເພັດ, ຄຳເພັດ ພອນແກ້ວ
2006: ສີຫັດຖະ ລາດຊະພົນ, ປາລີມາ ເພັດສີລີແສງ
2007: ປັນຍາ ຈັນທະວົງ, ຈັນຊະນະ ສີຈັນທອງທິບ



ງານລ້ຽງຢູ່ ຫໍພັກ Komaba ກັບນ້ອງໆນັກສຶກສາລາວ

ງານນີ້ ຈັດຂຶ້ນປະມານເດືອນ6ຂອງທຸກໆປີ, ໂດຍມື້ທຳອິດແມ່ນເປັນການລາຍງານ ສະພາບການຂອງສະມາຄົມຈາກແຕ່ລະປະເທດ, ໃນຕອນຄ່ຳກໍ່ມີງານລ້ຽງຕ້ອນຮັບ, ມື້ທີ2 ແມ່ນເປັນການສຳມະນາທີ່ຈັດຂຶ້ນ ເພື່ອໃຫ້ເກັບກຳໄດ້ ສະພາບການຂອງຍີ່ປຸ່ນ, ມື້ທີ3 ແມ່ນການທັດສະນະສຶກສາ, ມື້ທີ4-5 ແມ່ນການເດີນທາງດ້ວຍຕົນເອງ ໄປສະຖາບັນເກົ່າ. ປົກກະຕິແລ້ວ ມື້ທີ6 ແມ່ນກັບຄືນປະເທດ ແຕ່ສາມາດ ຕໍ່ຕື່ມໄດ້ອີກ1ອາທິດ... (ອ່ານຕໍ່ຫນ້າ12)

# ທຶນການສຶກສາຕໍ່ຢູ່ປະເທດຍີ່ປຸ່ນ

ເປັນເລື່ອງທີ່ແນ່ນອນຢູ່ແລ້ວວ່າ ສະມາຊິກຂອງສະມາຄົມພວກເຮົາ ແມ່ນໄດ້ ໄປສຶກສາຢູ່ປະເທດຍີ່ປຸ່ນ ດ້ວຍຫລາຍໆທຶນການສຶກສາທີ່ ແຕກຕ່າງກັນ. ບາງຄົນກໍ່ຮຽນຕັ້ງແຕ່ ໂຮງຮຽນວິຊາຊີບຈົນເຖິງປະລິນຍາເອກ ຈາກທຶນນີ້ປ່ຽນໄປເປັນທຶນນັ້ນ ບາງເທື່ອກໍ່ບໍ່ມີທຶນ ຕ້ອງໄດ້ເຮັດວຽກເສີມ "ອາລຸໄບໂຕ້" ເພື່ອຫາເງິນມາຈ່າຍຄ່າຮຽນ; ບາງຄົນກໍ່ຮຽນພຽງທຶນດຽວຈົບແລ້ວກໍ່ກັບມາ, ມາຂໍທຶນໃຫມ່ຢູ່ລາວກໍ່ມີ. ດ້ວຍເຫດນີ້, ບັນດາສະມາຊິກພວກເຮົາ ຜູ້ທີ່ຜ່ານປະສົບການມາແລ້ວ ຈະຮູ້ດີວ່າ ທຶນໃດເປັນແນວໃດ, ແຕ່ສໍາລັບ ຜູ່ທີ່ບໍ່ເຄີຍໄປປະເທດຍີ່ປຸ່ນ ຫລື ໄປໃນໄລຍະສັ້ນ ອາດເວົ້າໄດ້ວ່າ ຂ້ອນຂ້າງຈະສັບສົນ.

ທີ່ນີ້ ຈຶ່ງໄດ້ສັງລວມ ເອົາບັນດາທຶນການສຶກສາຕໍ່ຢູ່ປະເທດຍີ່ປຸ່ນ, ນໍາມາສະເຫນີ ໃຫ້ຜູ້ທີ່ມີຄວາມສົນໃຈໄດ້ອ່ານ, ໂດຍສະເພາະ ກໍ່ແມ່ນນັກສຶກສາຜູ້ທີ່ສົນໃຈ ຢາກໄປຮຽນຕໍ່ຢູ່ປະເທດຍີ່ປຸ່ນ; ໃນປັດຈຸບັນທຶນການສຶກສາທີ່ມີຢູ່ລາວເຮົາ ສາມາດສັງລວມໄດ້ດັ່ງຕາຕະລາງລຸ່ມນີ້, ລາຍລະອຽດສາມາດຊອກອ່ານຕື່ມໄດ້ຈາກ ເວັບໄຊຂອງສະຖານທູດຍີ່ປຸ່ນປະຈໍາ ລາວ.

http://www.la.emb-japan.go.jp/la/jis/ryugaku.htm

| ລ/ດ | ຊື່ເຕັມ | ຊື່ຫຍໍ້ | ເປົ້າຫມາຍ | ຈໍານວນ ສະເຫນີ | ເງື່ອນໄຂ ແລະຂໍ້ມູນອື່ນໆ |
|---|---|---|---|---|---|
| 1 | MEXT - Researcher | MEXT | ຄົ້ນຄວ້າ | 5 | ອາຍຸຕໍ່າກວ່າ 35ປີ, ໄລຍະ2ປີ ລວມທັງກຽມພາສາ 6ເດືອນ |
| 2 | MEXT - Bachelor | MEXT | ຕີ | 10 | ອາຍຸລະຫວ່າງ 17-21ປີ, ໄລຍະ5ປີ ລວມທັງກຽມພາສາ 1ປີ |
| 3 | MEXT - Kosen (ເຕັກນິກ) | MEXT | ຮອງ-ຕີ | 15 | ອາຍຸລະຫວ່າງ 17-21ປີ, ໄລຍະ4ປີລ ວມທັງກຽມພາສາ 1ປີ |
| 4 | MEXT - Senshuh (ວິຊາຊີບ) | MEXT | ຊັ້ນສູງ | 3 | ອາຍຸລະຫວ່າງ 17-21ປີ, ໄລຍະ3ປີລ ວມທັງກຽມພາສາ 1ປີ |
| 5 | MEXT - Japan study | MEXT | - | - | ອາຍຸລະຫວ່າງ 18-30ປີ, ໄລຍະບໍ່ເຖິງ1ປີ |
| 6 | MEXT - Teacher Training | MEXT | - | - | ອາຍຸຕໍ່າກວ່າ 35ປີ, ໄລຍະ1.5ປີ ລວມທັງກຽມພາສາ 6ເດືອນ ຕ້ອງເປັນວິຊາການຢູ່ສະຖາບັນຄູຢ່າງຫນ້ອຍ 5ປີ |
| 7 | Young leaders Program | YLP | ໂທ | - | ອາຍຸຕໍ່າກວ່າ 40ປີ, ເຮັດການນໍາອົງການບໍລິຫານຂອງລັດ ປະມານ 3-5ປີ ຫລື ເປັນນັກທຸລະກິດ, ຄະແນນ TOEFL 550 ຂຶ້ນເມືອ |
| 8 | Asian Youth Fellowship | AYF | ໂທ ແລະ(ຫລື) ເອກ | 2 | ຮຽນພາສາຍີ່ປຸ່ນ 7ເດືອນ ກ່ອນເຂົ້າວິຊາສະເພາະ, ຜູ່ຮຽນໂທ ສາມາດເສັງຕໍ່ເອກໄດ້ (http://www.asiaseed.org/ayfj/) |
| 9 | Japanese Grant Aid for Human Resource Devel-opment Scholarship | JDS | ໂທ | 25 | ຮຽນເປັນພາສາອັງກິດ (http://sv2.jice.org/jds/) |
| 10 | JICA long-term training | JICA | ໂທ ຫລື ເອກ | - | ສະເພາະກໍລະນີ ທີ່ໂຄງການຊ່ວຍເຫລືອຂອງ JICA ສະເຫນີເອົາ |

ສໍາລັບຂໍ້2-4 ສ່ວນຫລາຍແມ່ນນັກຮຽນທີ່ຈົບມັດທະຍົມປາຍ ເຂົ້າມໍຊໍ 1ປີ ແລະກໍ່ເສັງໄປຮຽນ. ສ່ວນ5 ແມ່ນສະເພາະນັກສຶກສາ ທີ່ສຶກສາກ່ຽວກັບຍີ່ປຸ່ນ ໂດຍສະເພາະ ອາດຈະແມ່ນ ພາສາຍີ່ປຸ່ນ ຫລື ວັດທະນະທໍາຍີ່ປຸ່ນ, ແຕ່ຈະສັງເກດໄດ້ວ່າ ທຶນນີ້ ຈະເປັນລັກສະນະການແລກປ່ຽນ ໃນໄລຍະສັ້ນ ບໍ່ເຖິງປີ ແລະບໍ່ມີໃບປະກາດໃດໆ. ລໍາດັບທີ6 ກໍ່ແມ່ນສະເພາະ ສໍາລັບວິຊາການຄູ ແລະ ລໍາດັບທີ7 ແມ່ນສະເພາະ ພະນັກງານຫລັກແຫລ່ງຂອງອົງກອນລັດ. ຂ້າມໄປລໍາດັບທີ10 ກໍ່ແມ່ນສະເພາະ ພະນັກງານສັງກັດຫ້ອງການ ທີ່ມີໂຄງການຊ່ວຍເຫລືອຂອງໄຈກ້າ, ຜູ້ໄດ້ຮັບທຶນຈະຖືກຄັດເລືອກຈາກ ບັນດາຜູ້ສະຫມັກ ມາຈາກແຕ່ລະໂຄງການ. ສ່ວນທີ່ຍັງເຫລືອ, ລໍາດັບທີ1, 8 ແລະ9 ເປັນທຶນທີ່ເປີດກວ້າງທົ່ວໄປ. ລໍາດັບທີ9 ແມ່ນທຶນການສຶກສາປະມານ2ປີ, ມີພຽງແຕ່ປະລິນຍາໂທ, ບໍ່ຈໍາເປັນຕ້ອງກຽມພາສາຍີ່ປຸ່ນ ເພາະມີຫລາຍໆມະຫາວິທະຍາໄລ ທີ່ມີຫລັກສູດສອນເປັນ ພາສາອັງກິດຮອງຮັບຢູ່ ແລະເຫມາະສົມກັບຜູ້ທີ່ເຮັດວຽກແລ້ວ ແລະ ຢາກໄປຍົກລະດັບຂຶ້ນຕື່ມ. ລໍາດັບທີ8 ແມ່ນທຶນການສຶກສາປະມານ2-5ປີ ບໍ່ລວມໄລຍະກຽມພາສາຍີ່ປຸ່ນ 7ເດືອນ ແລະປີກຽມເຂົ້າ (Kenkyusei), ທຶນນີ້ ຈະສະຫນອງໃຫ້ຕັ້ງແຕ່ປະລິນຍາໂທເຖິງເອກ. ສຸດທ້າຍ, ລໍາດັບທີ1 ແມ່ນເປັນທຶນຄົ້ນຄວ້າ, ແຕ່ເຂົ້າໃຈວ່າເປັນທຶນປະລິນຍາໂທ ຫລືເອກ ເຊັ່ນດຽວກັນ. ສໍາລັບ1-7, ແມ່ນທາງສະຖານທູດຈະສົ່ງລາຍຊື່ໄປຫາກະຊວງສຶກສາຍີ່ປຸ່ນ; ແລະຈະຖືກພິຈາລະນາຮ່ວມກັບ ລາຍຊື່ທີ່ທາງມະຫາວິທະຍາໄລຍີ່ປຸ່ນສົ່ງຂຶ້ນມາ ບວກກັບຜູ້ສະຫມັກທົ່ວໄປພາຍໃນປະເທດຍີ່ປຸ່ນ.

# ຝາກເຖິງນັກສຶກສາຈະໄປຮຽນຕໍ່ (ຄວາມພ້ອມຂອງນັກສຶກສາ)

ໂດຍ ພັກນະຄອນ ຣັດຕະນະ
Ehime Univ., 2000-2003. ກະຊວງໂຍທາ ແລະຄົມມະນາຄົມ

ການສຶກສາ ແມ່ນເປັນສິ່ງທີ່ສຳຄັນຕໍ່ວຽກງານ ແລະອະນາຄົດຂອງຕົນເອງ ດັ່ງບາງສຸພາສິດ ທີ່ເພິ່ນເຄີຍເວົ້າຕິດຫູ ແລະໄດ້ຮັບຟັງກັນມາເລື້ອຍໆເຊັ່ນ: "ເງິນເຕັມພາ ບໍ່ທໍ່ພະຫຍາເຕັມປຸ້ມ" ຖ້າຕີຄວາມຫມາຍແບບງ່າຍໆ ອອກມາ ແມ່ນຫມາຍເຖິງວ່າ ຜູ້ທີ່ມີເງິນຄຳຊັບສິນບັດມາກມາຍ ກໍ່ບໍ່ທຽບເທົ່າກັບຜູ້ທີ່ມີການສຶກສາ ຄວາມຮູ້ຄວາມສາມາດ ຫັ້ນແລ້ວ! ແລະຍັງມີສຸພາສິດຫລາຍໆຄຳເວົ້າ ຕ່າງໆນາໆກັນໄປ... ດັ່ງນັ້ນ, ນັກຮຽນນັກສຶກສາກໍ່ພໍເຂົ້າໃຈຫມົດວ່າ ຄວາມຫມາຍຄວາມສຳຄັນຂອງການສຶກສານັ້ນຫລາຍຫນ້ອຍຊ່ຳໃດ? ຈຸດປະສົງ ທີ່ຂ້າພະເຈົ້າຢາກເວົ້າຫຍໍ້ໆ ໃນບົດຂຽນນີ້ ໃຫ້ນ້ອງໆ ນັກຮຽນນັກສຶກສາຟັງ ກໍ່ແມ່ນວ່າ ຈະກຽມຕົວແນວໃດ ເພື່ອໃຫ້ບັນລຸເປົ້າຫມາຍ ທີ່ຕົນວາງໄວ້ເຊັ່ນ:

+ ຮຽນເພື່ອຮັບເອົາຄວາມຮູ້ຄວາມສາມາດ ທີ່ມີຄຸນນະພາບແທ້ຈິງ ເພື່ອເອົາມານຳໃຊ້ສິ່ງຊ່ຽນ ແລະຖ່າຍທອດໃຫ້ນ້ອງໆນັກຮຽນລຸ້ນຫລັງ;

+ ຮຽນເພື່ອໃຫ້ໄດ້ຄະແນນແຫ່ງກຽດນິຍົມ, ໃບປະກາດສະນີຍະບັດ ພຽບພ້ອມໄປດ້ວຍຄຸນສົມບັດມາລະຍາດອັນດີງາມ;

+ ຮຽນເພື່ອໃຫ້ໄດ້ເຕັກນິກ, ວິທະຍາສາດອັນໃຫມ່ ແລະທັນສະໄຫມ ເພື່ອເອົາມາປະຍຸກເສີມສ້າງ ແລະພັດທະນາພື້ນຖານເສດຖະກິດສັງຄົມລາວ.

ດັ່ງນັ້ນ, ເພື່ອໃຫ້ສຳເລັດຕາມຄາດຫມາຍ ທີ່ຕົນວາງໄວ້ຂ້າງເທິງນັ້ນ, ຄວນປະຕິບັດຕົນແນວໃດ ເຊິ່ງເບິ່ງແລ້ວຄືບໍ່ຍາກ ແລະກໍ່ບໍ່ງ່າຍປານໃດ, ດັ່ງນີ້:

- ບຸກຈິດສຳນຶກຕົນເອງ ໃຫ້ເປັນຄົນຮັກໃນການອ່ານປຶ້ມ ແລະເອກະສານຕ່າງໆ ທີ່ກ່ຽວພັນກັບຫົວຂໍ້ ໃນການຄົ້ນຄວ້າຂອງຕົນເອງ;
- ວາງແຜນວຽກ ໃນກິດຈະກຳຕ່າງໆຂອງຕົນເອງທີ່ຈະເຮັດ ແລະປະຕິບັດໃນແຕ່ລະມື້, ເມື່ອຮອດທ້າຍອາທິດແລ້ວ ກໍ່ໃຫ້ທົບທວນເບິ່ງຄືນວ່າ ວຽກໃດທີ່ເຮັດໄດ້ແລ້ວ ແລະອັນໃດເຮັດບໍ່ໄດ້.
- ຮັກສາສຸຂະພາບຂອງຕົນເອງ ໃຫ້ແຂງແຮງເປັນປົກກະຕິ ແລະມັກອອກກຳລັງກາຍຈົນເຫື່ອອອກ ຢ່າງຫນ້ອຍສຸດ 3ຄັ້ງຕໍ່ອາທິດ, ເຊັ່ນ: ການແລ່ນ, ຂີ່ລົດຖີບ ຫລືກິລາປະເພດອື່ນໆ ທີ່ຕົນມັກຫລິ້ນ ແລະຖະນັດ;
- ສ້າງນິໄສ ໃຫ້ເປັນຄົນເຜື່ອແຜ່ກວ້າງຂວາງ, ອົດທົນ, ດຸຫມັ່ນ, ຊື່ສັດ ແລະເຄົາລົບຕໍ່ລະບຽບກົດຫມາຍ ແລະໂດຍສະເພາະ ໃຫ້ຮັກສາເວລາ ແລະສັດຈະ; ແລະ
- ກຽມຕົນເອງ ໃຫ້ຢູ່ໃນຄວາມພ້ອມຕະຫລອດ, ມອງໂລກໃນແງ່ບວກ ແລະຄິດໃນແງ່ສ້າງສັນ.

ໃຫ້ຄິດ ແລະສ້າງອຸດົມຂອງຕົນເອງສະເຫມີວ່າ:

1) ສາມສິ່ງໃນຊີວິດຂອງຄົນເຮົາ ທີ່ບໍ່ສາມາດຮຽກຮ້ອງກັບຄືນມາໄດ້: ເວລາ, ວາຈາ ແລະໂອກາດ.

2) ສາມສິ່ງທີ່ຄວນເກັບໄວ້ໃນຊີວິດຂອງຄົນເຮົາ ເຊັ່ນ: ຄວາມສະຫງົບ, ຄວາມຊື່ສັດ, ຄວາມຫວັງ.

3) ສາມສິ່ງທີ່ມີຄ່າໃນຊີວິດຂອງຄົນເຮົາ ເຊັ່ນ: ຄວາມຮັກ, ເຄົາລົບຕົວເອງ ແລະມິດແທ້.

ຫາກບັນດາທ່ານ ຫລືນ້ອງໆ ສາມາດປະຕິບັດໄດ້ຄືທີ່ຂ້າພະເຈົ້າໄດ້ຂຽນມາດັ່ງຂ້າງເທິງນີ້ ຫວັງວ່ານ້ອງໆ ຄົງປະສົບຜົນສຳເລັດບໍ່ຫລາຍ ກໍ່ຫນ້ອຍ.

ຂໍຂອບໃຈ!

## ສິລະປິນຊົນນະບົດ - ທອງວັນ ເທບໄກສອນ



ພາບຖ່າຍ ທີ່ສະຫາຍທອງວັນ ໄດ້ຮັບລາງວັນຊະນະເລີດ ໃນການປະກວດທີ່ JICafe

ບັນຍາ: "ເປັນແນວໃດ? ສະບາຍດີ! ຢູ່ວຽງຈັນຢູ່ບໍ່ເຮື້ອ?"

ທອງວັນ: "ໂອ! ກັບລະ ມາຢ່າງຢູ່ ຊຳເຕີ້(ໃຕ້) ນີ້ເນີ້"

ບັນຍາ: "ປານໃດຊິກັບມາ, ມີວຽກຊິຢາກຫາ ຊັ້ນດອກ"

ທອງວັນ: "ມື້ຮືຊິກັບລົງໄປ!"

"ແຕ່ວ່າ ຈາກນັ້ນ ກະຊິຕໍ່ລົດໄປອັດຕະປືຕໍ່"

.... ....

ຈາກການສົນທະນາທາງໂທລະສັບຂ້າງເທິງ ກໍ່ຄົງເຂົ້າໃຈດີວ່າ ເປັນຫຍັງ ຈຶ່ງໃສ່ສາຍຍາວ່າ "ສິລະປິນຊົນນະບົດ" ໃຫ້ກັບທອງວັນ ເຊິ່ງເປັນສະມາຊິກ ທີ່ໄປສຶກສາຢູ່ຍີ່ປຸ່ນ ປີ1992-1997. ເດືອນຫນຶ່ງມີ30ວັນ ແຕ່ເວລາທີ່ລາວຢູ່ວຽງຈັນ ແມ່ນບໍ່ຮອດ10ມື້, ສ່ວນຫລາຍ ແມ່ນໄປເຮັດວຽກຢູ່ຕາມເຂດຊົນນະບົດ ເຂດຊົນເຜົ່າຕ່າງໆ, ໄປກິ້ງເກືອກລີເລືອຢູ່ກັບສະຫນາມ ຖືກຫມັດຖືກເຫັບກັດຈົນໂຕລາຍ, ບາງເທື່ອກໍ່ຮ່ອນເຂົ້າຫ້ອງຜ່າຕັດ ກັບທ່ານຫມໍຍີ່ປຸ່ນ ສິ່ງທີ່ຄົນທຳມະດາ ບໍ່ຄ່ອຍເຫັນກໍ່ເຫັນຈົນລຶ້ງ... ... ຢູ່ທີ່ນີ້, ຈະແນະນຳພຽງເທົ່ານີ້ ຂໍບໍ່ຂຽນຫຍັງຫລາຍ ເພາະຫນ້າເຈ້ຍເທົ່ານີ້ ຄົງຂຽນປະສົບການຂອງລາວໄດ້ບໍ່ເຖິງ 10%, ໃຜສົນໃຈອັນໃດ ກໍ່ຈົ່ງລົມກັບລາວຕື່ມເນາະ!!



ບັນຍາກາດຂອງການສໍາມະນາ ມິດຕະພາບລາວ-ຍີ່ປຸ່ນ

(ຕໍ່ຈາກໜ້າ2, ວຽກງານສໍາມະນາ.....)
FORCOM ທ່ານອິວະຊະ ມະຊະຢຸກິ ມາສະເໜີກ່ຽວກັບບັນຫາໂລກຮ້ອນ ແລະໄດ້ອະທິບາຍ ກົນໄກໃນການຫລຸດຜ່ອນບັນຫາ ດ້ວຍການຫລຸດ-ຜ່ອນການທໍາລາຍປ່າໄມ້.

ຝ່າຍຍີ່ປຸ່ນ ແມ່ນນໍາທີມໂດຍທ່ານເອກອັກຄະລັດຖະທູດ ມິຍະຊິຕະ ມະຊະອະກິ ແລະ ພະນັກງານສະຖານທູດ 10ກວ່າຄົນ, ທ່ານຕະກະຊິມາ ຣິໂຣະອະກິ ຫົວໜ້າຫ້ອງການໄຈກ້າປະຈໍາລາວ ແລະຊ່ຽວຊານໄຈກ້າຫລາຍຄົນ. ຝ່າຍລາວແມ່ນຮອງອະທິການບໍດີມະຫາວິທະຍາໄລແຫ່ງຊາດ ທ່ານຮສ. ດຣ. ສາຍຂອງ ສາຍນະສິນ ແລະໄດ້ຮັບກຽດເປັນແຂກເຂົ້າຮ່ວມຈາກທ່ານນາງ ເຂັມແພງພົນເສນາ ລັດຖະມົນຕີອົງການ ຊັບພະ-ຍາກອນນໍ້າ ແລະສິ່ງແວດລ້ອມ, ທ່ານຖາວອນ ປະທານຄະນະກໍາມະການປ້ອງກັນຊາດ ປະຈໍາສະພາແຫ່ງຊາດ. ນອກນັ້ນຍັງມີສະມາຊິກສະມາຄົມ, ນັກສຶກສາຈາກມຊ ລວມທັງໝົດ 200ກວ່າຄົນ. ສໍາມະນາໄດ້ດໍາເນີນໄປຢ່າງເຄັ່ງຮ້ອນ ໂດຍມີການປະກອບຄໍາຄິດຄໍາເຫັນຂອງທ່ານເຂັມແພງກ່ຽວກັບການພັດທະນາບຶງທາດຫລວງ ແລະຂອງທ່ານຖາວອນ ກ່ຽວກັບບັນຫາປ່າໄມ້ ຢູ່ທາງພາກໃຕ້ຂອງລາວ.

ເນື້ອໃນລະອຽດຂອງການສໍາມະນາ ຄົງບໍ່ສາມາດເອົາມາເລົ່າໃຫ້ກັນຟັງໄດ້ໝົດຢູ່ທີ່ນີ້. ພຽງແຕ່ຢາກຝາກຂອບໃຈມາຍັງສະມາຊິກຂອງ ສະມາຄົມທຸກໆຄົນ ທີ່ໄດ້ປະກອບສ່ວນໃຫ້ງານສໍາເລັດລົງດ້ວຍດີ ແລະຫວັງຢ່າງຍິ່ງວ່າ ຈະໄດ້ຮັບຄວາມຮ່ວມມືຢ່າງດີ ຈາກພວກເຮົາທຸກຄົນອີກໃນປີໜ້າ.



ນັກສຶກສາຈັບກຸ່ມກັນ ເພື່ອສຶກສາບັນຫາ

2) ວຽກງານສໍາມະນາອັນທີສອງ ກໍ່ແມ່ນງານຢູ່ JICafe ໂດຍເປັນການຈັດຮ່ວມກັນລະຫວ່າງສະມາຄົມ ແລະ JICafe, ມີຫົວຂໍ້ຂອງການສໍາມະ-ນາທີ່ເປັນພາສາອັງກິດວ່າ "Development Education". ຜູ້ນໍາສະເໜີຈະແມ່ນ ສະມາຊິກຂອງສະມາຄົມພວກເຮົາເປັນຫລັກ ແລະຜູ້ເຂົ້າຮັບຟັງກໍ່ແມ່ນ ນັກສຶກສາຈາກພາກສ່ວນຕ່າງໆເຊັ່ນ: ສະຖາບັນສຸດສະກະ, ວິທະຍາໄລການເງິນ, ຄະນະນິຕິສາດ/ມຊ, ວິທະຍາໄລລາວ-ອາເມລິກາ, ມັດທະຍົມສີສັດຕະນາກ ແລະອື່ນໆອີກ. ສ່ວນສະຖານທີ່ກໍ່ແມ່ນຢູ່ສູນ JICafe ນັ້ນເລີຍ. ທີ່ຜ່ານມາໄດ້ຈັດມາແລ້ວ 5ຄັ້ງ ຜູ້ເຂົ້າຮ່ວມແຕ່ລະຄັ້ງປະມານ20-30ຄົນ, ເຫດຜົນທີ່ກໍານົດຈໍານວນໄວ້ແບບນີ້ ກໍ່ຍ້ອນຄວາມ-ຈໍາກັດຂອງສະຖານທີ່ ແລະສິ່ງສໍາຄັນ ກໍ່ຄື ເປັນການສໍາມະນາແບບມີສ່ວນຮ່ວມຂອງຜູ້ເຂົ້າຮ່ວມ ຫລືມີລັກສະນະເປັນ ເວີກຊອບ(workshop).

| ຫົວຂໍ້(ວັນທີ) | ຜູ້ສະເໜີ |
|---|---|
| 1. ຄວາມເປັນມາຂອງ Chocolate (22/09/07) | ຈັນຊະນະ |
| 2. ບົດບາດຍິງ-ຊາຍ ພາກທີI (13/10/07) | ແສງອໍາພອນ |
| 3. ການຂາຍແຮງງານໄປໄທ (17/11/07) | ຈັນຊະນະ |
| 4. ບົດບາດຍິງ-ຊາຍ ພາກທີII (16/02/08) | ແສງອໍາພອນ |
| 5. ການປ່ຽນແປງຂອງສະພາບອາກາດ (15/03/08) | ອັນທະກອນ |



ບັນຍາກາດຂອງການສໍາມະນາ Development Education

ງານສໍາມະນາຫລໍ່ານີ້ ມີຈຸດປະສົງໃຫ້ນັກຮຽນນັກສຶກສາ ທີ່ເປັນອະນາຄົດຂອງຊາດ ໄດ້ມີໂອກາດຄິດ ແລະປຶກສາຫາລືກັນ ກ່ຽວກັບການພັດທະນາ. ຈາກການສະຫລຸບຄວາມຄິດຄໍາເຫັນຂອງຜູ້ເຂົ້າຮ່ວມ ສ່ວນຫລາຍກໍ່ບອກວ່າ "ມີຄວາມຮູ້ສຶກດີໃຈ ທີ່ມີໂອກາດ ໄດ້ເຂົ້າຮ່ວມກິດຈະກໍາແບບນີ້, ເຮັດໃຫ້ມີໂອກາດໄດ້ຄິດຊອກຫາວິທີແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນສັງຄົມ". ຫລາຍຄົນກໍ່ເວົ້າວ່າ "ນອກຈາກຈະໄດ້ຄວາມຮູ້ ແລະຖອດຖອນປະສົບການຈາກລຸ້ນອ້າຍລຸ້ນເອື້ອຍແລ້ວ, ຍັງໄດ້ພົບພໍ້ໝູ່ເພື່ອນໃໝ່ໆອີກດ້ວຍ, ຢາກໃຫ້ຈັດກິດຈະກໍານີ້ ໄປຕະຫລອດ".

ທັງ2ງານສໍາມະນາ ທີ່ສະມາຄົມພວກເຮົາຈັດຕັ້ງປະຕິບັດກັນມາ, ອາດຈະມີລັກສະນະທີ່ແຕກຕ່າງກັນ, ແຕ່ເນື້ອໃນຈິດໃຈ ແມ່ນບໍ່ມີຫຍັງຕ່າງກັນ, ເພາະວ່າ ອັນໃດກໍ່ມີຈຸດປະສົງ ຖ່າຍທອດຄວາມຮູ້ຄວາມສາມາດ ແລະປະສົບການ ທີ່ສະມາຊິກເຮົາທຸກຄົນມີຢູ່ ໃຫ້ແກ່ສັງຄົມ, ໂດຍສະເພາະກໍ່ແມ່ນນັກຮຽນນັກສຶກສາ ທີ່ເປັນລຸ້ນນ້ອງຂອງພວກເຮົາ, ສິ່ງເຫລົ່ານີ້ກໍ່ເປັນການປະກອບສ່ວນອັນໜຶ່ງ ໃຫ້ແກ່ສັງຄົມ ທີ່ພວກເຮົາເຮັດໄດ້.

# ບົດອ່ານ: ບໍລິສັດກັບຕະຫລາດແຮງງານໃນລາວ

ໂດຍ ສັນຕິ ດວງຕາວັນ
Nagoya Univ., 2001-2007
ໂຄງການປັບປຸງລັດວິສາຫະກິດ, ສໍານັກງານນາຍົກ

ທ່າມກາງການແຂ່ງຂັນທາງດ້ານເສດຖະກິດ ບໍລິສັດທຸກປະເພດໃນຂະແຫນງການຕ່າງໆບໍ່ວ່ານ້ອຍໃຫຍ່ ແມ່ນໄດ້ໃຫ້ຄວາມສໍາຄັນຕໍ່ກົນໄກ ການບໍລິຫານບຸກຄະລາກອນບໍລິສັດ; ໃນນັ້ນ, ການບັນຈຸພະນັກງານທີ່ມີຄວາມສາມາດເຂົ້າບໍລິສັດຂອງຕົນ ກໍ່ແມ່ນປັດໃຈຫນຶ່ງ ທີ່ສໍາຄັນໃນບໍລິສັດລາວ.

ທຸກໆບໍລິສັດລ້ວນແລ້ວແຕ່ຕ້ອງການບັນຈຸພະນັກງານ ທີ່ບໍ່ພຽງແຕ່ມີຄວາມສາມາດເທົ່ານັ້ນ ແຕ່ຍັງມີປະສົບການອີກດ້ວຍ ເຊິ່ງພວກເຮົາສາມາດສັງເກດເຫັນໄດ້ ໃນການປະກາດຮັບສະຫມັກຕໍາແຫນ່ງຕ່າງໆທາງຫນັງສືພິມ.

ເປັນຫຍັງ ບໍລິສັດສ່ວນໃຫຍ່ໃນປະເທດເຮົາ ທີ່ກໍາລັງປະກາດຮັບສະຫມັກເອົາພະນັກງານ ຕັ້ງເງື່ອນໄຂ ຫລືມາດຖານໄວ້ສູງສໍາລັບຕໍາແຫນ່ງໃດຫນຶ່ງ, ເຊັ່ນ: ຜູ້ສະຫມັກຕ້ອງມີປະສົບການເຮັດວຽກຫລາຍປີ, ຕ້ອງເວົ້າພາສາອັງກິດໄດ້, ຮູ້ໃຊ້ຄອມພິວເຕີ ແລະອື່ນໆ? ເງື່ອນໄຂ ຫລືມາດຖານດັ່ງກ່າວ ໄດ້ເຮັດໃຫ້ຜູ້ສົນໃຈທີ່ຈະສະຫມັກວຽກນັ້ນໆ ເກີດຄວາມທໍ້ຖອຍ, ຂາດຄວາມເຊື່ອຫມັ້ນ ແລະບໍ່ກ້າ ເຖິງວ່າພຽງແຕ່ຈະລອງຍື່ນໃບສະຫມັກ. ກຸ່ມຜູ້ສະຫມັກເຫລົ່ານັ້ນ ໂດຍສະເພາະ ກຸ່ມຜູ້ທີ່ຫາກໍ່ຮຽນຈົບໃຫມ່ ຈາກບັນດາສະຖາບັນການສຶກສາ ແລະສູນເຝິກອົບຮົມວິຊາຊີບຕ່າງໆທົ່ວປະເທດ.

ມີຫລາຍປັດໃຈ ທີ່ໄດ້ເຮັດໃຫ້ບໍລິສັດສ່ວນຫລາຍ ຕັ້ງເງື່ອນໄຂໄວ້ສູງ.

- ປັດໃຈທີຫນຶ່ງ ອາດເນື່ອງມາຈາກວ່າ ບໍລິສັດລາວສ່ວນໃຫຍ່ ຍັງບໍ່ທັນມີລະບົບການພັດທະນາ ແລະເຝິກອົບຮົມບຸກຄະລາກອນພາຍໃນບໍລິສັດ ແລະຄິດວ່າ ການພັດທະນາ ແມ່ນເປັນການສິ້ນເປືອງ ແລະຕ້ອງເປັນຫນ້າທີ່ຂອງສະຖາບັນການສຶກສາເປັນຜູ້ຮັບຜິດຊອບ. ບໍລິສັດລາວ ສ່ວນຫລາຍຍັງໃຫ້ຄວາມສໍາຄັນຫນ້ອຍຫລາຍ ຕໍ່ການພັດທະນາບຸກຄະລາກອນຂອງຕົນ.

- ປັດໃຈທີສອງ ແມ່ນຕະຫລາດແຮງງານໃນປະເທດຍັງນ້ອຍ. ການຂະຫຍາຍຕົວທາງເສດຖະກິດໃນຫລາຍປີທີ່ຜ່ານມາ ເຖິງແມ່ນວ່າ ຈະໄດ້ສ້າງວຽກເຮັດງານທໍາເພີ່ມຂຶ້ນກໍ່ຕາມ ແຕ່ກໍ່ຍັງມີຂໍ້ຈໍາກັດຢູ່. ການປັບປຸງທີ່ດີຂຶ້ນຂອງຂະແຫນງການສຶກສາ, ການສ້າງໂອກາດໃຫ້ແຮງງານຈໍານວນຫນຶ່ງ ໄດ້ສຶກສາຕໍ່ຢູ່ຕ່າງປະເທດ ແລະການເຕີບໂຕທາງດ້ານພົນລະເມືອງໃນປະເທດ ໄດ້ສ້າງໃຫ້ທາງເລືອກ ໃນການຈ້າງງານຂອງບໍລິສັດ ຫລາຍຢ່າງເຫລືອເຟືອ. ສະນັ້ນ, ໃນເມື່ອແຮງງານ ເກີນຂີດຄວາມຕ້ອງການຂອງຕະຫລາດແຮງງານ ມັນເປັນເລື່ອງປົກກະຕິທີ່ບໍລິສັດຕ່າງໆ ມີຫລາຍທາງທີ່ຈະເລືອກເອົາຄົນທີ່ດີທີ່ສຸດເຂົ້າເຮັດວຽກ ແລະໃນເວລາດຽວກັນ ມັນກໍ່ໄດ້ສ້າງຂະບວນການແຂ່ງຂັນລະຫວ່າງແຮງງານດ້ວຍກັນ; ຜູ້ທີ່ບໍ່ພັດທະນາ ຫລືບໍ່ສາມາດພັດທະນາຕົນເອງ ບໍ່ວ່າດ້ວຍວິທີໃດໆ ຕາມກະແສແຮງງານຕະຫລາດ ກໍ່ຈະຕົກຢູ່ໃນສະຖານະການທີ່ລໍາບາກ.

- ປັດໃຈທີສາມ ແມ່ນການຜະລິດກໍາລັງແຮງງານ ທີ່ສະຖາບັນການສຶກສາຕ່າງໆຍັງເປັນໃນລັກສະນະຕາມກະແສນິຍົມເປັນສ່ວນໃຫຍ່ ແລະຍັງບໍ່ສອດຄ່ອງກັບຄວາມຕ້ອງການ ແລະທ່າອ່ຽງຂອງການພັດທະນາ ເສດຖະກິດ-ອຸດສາຫະກໍາຂອງປະເທດ. ການຂະຫຍາຍຕົວຂອງຂະແຫນງການສຶກສາທັງຂອງພາກສ່ວນລັດ ແລະເອກະຊົນ ຍັງໃຫ້ທາງເລືອກຫລັກສູດອັນຈໍາກັດ ເຊັ່ນ: ການບໍລິຫານທຸລະກິດ, ການບັນຊີ, ຫ້ອງການ ເຊິ່ງຂະອຫນງວິຊາຊີບອື່ນໆ ຍັງຈໍາກັດ. ສິ່ງເຫລົ່ານີ້ ໄດ້ສ້າງຄວາມບໍ່ດຸ່ນດ່ຽງຂອງຕະຫລາດແຮງງານລະຫວ່າງ ຄວາມຕ້ອງການ ແລະການສະຫນອງແຮງງານຕົວຈິງ, ບາງຂະແຫນງການ ມີແຮງງານເກີນຄວາມຈໍາເປັນ ແລະບາງຂະແຫນງການ ຊໍ້າພັດຂາດແຄນທາງແຮງງານ.

- ປັດໃຈທີສີ່ ແມ່ນການທີ່ບໍ່ລະບົບຂໍ້ມູນຂ່າວສານ ເພື່ອສະຫນອງໃຫ້ບັນດາແຮງງານໃຫມ່ ທີ່ຫາກໍ່ຮຽນຈົບໃຫມ່. ແຮງງານໃຫມ່ ທີ່ເລີ່ມຊອກຫາວຽກເຮັດງານທໍາ ຂາດເຄື່ອງມື ຫລືອົງກອນທີ່ຮັບຜິດຊອບ ໃນການສະຫນອງຂໍ້ມູນຂ່າວສານຈໍາເປັນໃຫ້ເຂົາເຈົ້າ.

- ປັດໃຈສຸດທ້າຍ ແມ່ນການຈ້າງງານດ້ວຍເສັ້ນສາຍ ເຊິ່ງສາມາດເວົ້າໄດ້ວ່າການຈ້າງງານດັ່ງກ່າວ ເປັນປະກົດການປົກກະຕິໄປແລ້ວ ໃນຕະຫລາດແຮງງານລາວ. ຜູ້ສະຫມັກ ຍັງບໍ່ພຽງແຕ່ປະສົບກັບເງື່ອນໄຂ ຫລືມາດຖານທີ່ສູງແລ້ວ ແຕ່ເຂົາເຈົ້າຍັງຕ້ອງປະສົບກັບການສະຫມັກແບບຄົນເຈົ້າຄົນຂ້ອຍອີກດ້ວຍ. ເຮັດໃຫ້ຜູ້ສະຫມັກສ່ວນໃຫຍ່ ໂດຍສະເພາະຜູ້ທີ່ເຂົ້າຕະຫລາດແຮງງານໃຫມ່ນັ້ນ ຕ້ອງພົບກັບບັນຫາທີ່ຫນັກຫນ່ວງຂຶ້ນຕື່ມ.

---

# ນໍ້າປະປາຢູ່ນະຄອນຫລວງວຽງຈັນ

ໂດຍ ດຣ. ໄຊປະຊາ ວຽງສອນ
Saga Univ., 1999-2004, ໂຄງການພັດທະນານໍ້າປະປາ ະຄອນຫຼວງວຽງຈັນ

ປັດຈຸບັນ ຢູ່ນະຄອນຫຼວງວຽງຈັນຂອງພວກເຮົາ ມີໂຮງງານນໍ້າປະປາຢູ່ 6 ແຫ່ງຄື: ໂຮງງານນໍ້າປະປາເກົ້າລ້ຽວ ຜະລິດໄດ້ 20,000ແມັດກ້ອນ/ມື້, ໂຮງງານນໍ້າປະປາຈີ່ນາຍໂມ້ 80,000ແມັດກ້ອນ/ມື້, ໂຮງງານນໍ້າປະປາທ່າເດື່ອ 600ແມັດກ້ອນ/ມື້, ໂຮງງານນໍ້າປະປາທ່າງ່ອນ 550ແມັດກ້ອນ/ມື້, ໂຮງງານນໍ້າປະປາດົງໝາກຄາຍ 20,000ແມັດກ້ອນ/ມື້ ແລະໂຮງງານນໍ້າປະປາເພຍລາດ, ລວມແລ້ວ ຄວາມສາມາດຂອງການຜະລິດນໍ້າປະປາທັງໝົດ ແມ່ນມີ 121,000ແມັດກ້ອນ/ມື້ ແຕ່ຄວາມຕ້ອງການຊົມໃຊ້ນໍ້າປະປາຂອງປະຊາຊົນ ແມ່ນນັບມື້ສູງຂຶ້ນ.

ລັດຖະບານໄດ້ໃຫ້ມີການສຶກສາຄົ້ນຄ້ວາກ່ຽວກັບ ໂຄງການພັດທະນານໍ້າປະປານະຄອນຫຼວງວຽງຈັນ ເຊິ່ງເລີ້ມມາແຕ່ເດືອນມີນາປີ2003 ແລະສໍາເລັດລົງໃນເດືອນມັງກອນປີ2004 ໂດຍໄດ້ຮັບການຊ່ວຍເຫຼືອຈາກອົງການໄຈກາ. ໃນເດືອນກຸມພາປີ2006 ລັດຖະບານຍີ່ປຸ່ນ ໄດ້ອະນຸມັດເງິນຊ່ວຍເຫຼືອລ້າ ໃຫ້ແກ່ລັດຖະບານລາວ ໃນງວດທໍາອິດ ເປັນຈໍານວນ 42,000,000 ເຢັນ ແລະ ມາເຖິງວັນທີ 10/02/2006 ໄດ້ມີການລົງນາມໃນຈົດໝາຍແລກປ່ຽນມອບເງິນຊ່ວຍເຫຼືອລ້າ ກ່ຽວກັບໂຄງການພັດທະນານໍ້າປະປາ ນະຄອນຫຼວງວຽງຈັນ ຕື່ມອີກໃນມູນຄ່າ 2,875,000,000 ເຢັນ. ກະຊວງຄຂປກ ໄດ້ເຫັນດີຮັບເອົາ ບໍລິສັດທີ່ປຶກສາ NIHONSUIDO Consultant Co. Ltd. ເປັນທີ່ປຶກສາໃຫ້ໂຄງການ. ການກໍ່ສ້າງຂອງ ໂຄງການແມ່ນໄດ້ຖືກລິເລີ້ມວັນທີ 22/10/2006 ແລະຜູ້ຮັບເຫມົາກໍ່ສ້າງແມ່ນບໍລິສັດ SHIMIZU Cooperation.

(ອ່ານຕໍ່ຫນ້າ 11)

(ຕໍ່ຈາກໜ້າ1, ຄະນະ.....) ໂດຍພື້ນຖານ, ສະມາຄົມເປັນຂອງສະມາຊິກ ໝົດທຸກຄົນ, ບໍລິຫານໂດຍສະມາຊິກ ແລະເຮັດເພື່ອສະມາຊິກ. ຜ່ານມາ ມີຫລາຍຄົນມັກຖາມວ່າ "ເຂົ້າເປັນສະມາຊິກສະມາຄົມແລ້ວຈະໄດ້ຫຍັງ?" ຫລືວ່າ "ສະມາຄົມຕ້ອງການໃຫ້ຊ່ວຍຫຍັງ?" ແລະອື່ນໆ. ສອງຄໍາຖາມ ຂ້າງເທິງເປັນຄໍາຖາມທີ່ຕອບຍາກ, ເນື່ອງຈາກວ່າ ຄໍາຕອບຈະປ່ຽນແປງ ໄປຕາມຄວາມຄິດຂອງສະມາຊິກ ແຕ່ລະຄົນນັ້ນເອງ. ເວົ້າອີກຢ່າງໜຶ່ງ, ກໍ່ແມ່ນວ່າ "ສະມາຄົມຈະໃຫ້ຫຍັງສະມາຊິກ ກໍ່ຂຶ້ນກັບສະມາຊິກ ນັ້ນເອງ" "ສະມາຄົມຢາກໃຫ້ຊ່ວຍຫຍັງ ກໍ່ຂຶ້ນກັບວ່າ ສະມາຊິກຢາກເຮັດຫຍັງ ເຊັ່ນດຽວກັນ". ມີຫລາຍຢ່າງກ່ຽວກັບສະມາຄົມທີ່ຖືກເຂົ້າໃຈຜິດ, ຫລັກໆ ກໍ່ແມ່ນເຂົ້າໃຈຜິດວ່າ "ສະມາຄົມ" = "ຄະນະບໍລິຫານ". ຄວາມຈິງແລ້ວ, ມັນບໍ່ແມ່ນຈັ່ງຊັ້ນ ຄະນະບໍລິຫານ ເປັນພຽງແຕ່ຄະນະທີ່ມາອໍານວຍ ຄວາມສະດວກ ໃນການຈັດຕັ້ງປະຕິບັດວຽກງານ ຫລືກິດຈະກໍາຕ່າງໆ ຂອງສະມາຄົມເທົ່ານັ້ນ. ແຕ່ວ່າ, ຫລັກການພື້ນຖານ ແນວຄິດແນວທາງ ພື້ນຖານ ຂອງສະມາຄົມກໍ່ຕ້ອງຂຶ້ນກັບສະມາຊິກ, ໂດຍອາໄສກອງປະຊຸມ ໃຫຍ່ປະຈໍາປີ ເປັນເວທີໃນການສະແດງຄວາມຄິດຄວາມເຫັນ, ເປັນບ່ອນ ຕັດສິນວ່າ ເຫັນດີຫລືບໍ່ເຫັນດີ, ເປັນບ່ອນທ້ອນໂຮມໃຫ້ເອກະພາບກັນ. ຂໍໂທດຫລາຍໆ ທີ່ເປີດຫົວເລື່ອງຍາວໄປຫລາຍເຕີບ, ແຕ່ສິ່ງທີ່ກ່າວມາ ຈະເປັນແນວຄິດພື້ນຖານໃນການເຮັດວຽກຂອງຄະນະ ໃນໄລຍະຜ່ານມາ ທີ່ພະຍາຍາມໃຫ້ສະມາຊິກທຸກຄົນ ໄດ້ຮັບຂໍ້ມູນຂ່າວສານ ໄດ້ມີໂອກາດມາ ຮ່ວມກິດຈະກໍາ ໄດ້ມີເວທີໃນການສະແດງຄວາມຄິດເຫັນ ຫລາຍຂຶ້ນ. ໂດຍຄວາມພະຍາຍາມຂອງສະມາຊິກທຸກໆຄົນ ໃນໄລຍະຜ່ານມາ ສາມາດ ສະຫລຸບໄດ້ເປັນຫົວຂໍ້ ດັ່ງຕໍ່ໄປນີ້.

- <u>ວຽກງານຂໍ້ມູນ ແລະຂ່າວສານ</u>: ສ້າງເນວລິງລິສຂອງຄະນະບໍລິຫານ ແລະຂອງສະມາຊິກທັງໝົດ, ສ້າງເວັບໄຊຂອງສະມາຄົມ, ຈັດພິມຈົດ-ໝາຍຂ່າວສະບັບທີ3, ເຮັດໂບຣຊົວ 1ຊຸດ, ເຂົ້າຮ່ວມງານວາງສະແດງຢູ່ທີ່ ສູນໄອເທັກ ແລະ ສູນຮ່ວມມືລາວ-ຍີ່ປຸ່ນ ແຫ່ງລະ1ຄັ້ງ ແລະອື່ນໆ.







ພາບບາງຕອນຂອງລະຄອນ ຫລາຍຄົນທີ່ແປ ກໍ່ອາດອົດ ຫລັບອົດນອນ, ແຕ່ເປັນປະສົບ ການທີ່ດີເນາະ...

ນ້ອງໆນັກສຶກສາທີ່ເຂົ້າຮ່ວມສໍາມະນາກ່ຽວກັບ ການສຶກສາການພັດທະນາ

- <u>ວຽກງານກິດຈະກໍາ</u>: ໄດ້ຈັດກອງປະຊຸມລະຫວ່າງ ສະມາຊິກນໍາກັນ ຫລາຍໆຄັ້ງ, ມີການຄັດເລືອກຜູ້ຮັບຜິດຊອບ ໃນແຕ່ລະໜ່ວຍກິດຈະກໍາ ເພື່ອຄວາມສະດວກ ແລະເພື່ອໃຫ້ປະກົດຜົນເປັນຈິງ.

ໂດຍກິດຈະກໍາພາຍໃນ ກໍ່ແມ່ນໄດ້ຈັດທີມເຕະບານຂອງສະມາຄົມ ແລະ ໄດ້ລົງແຂ່ງຂັນຫລາຍນັດ, ມີການພົບປະສັງສັນລະຫວ່າງສະມາຊິກ ຫລາຍໆຄັ້ງ ເຊິ່ງຄັ້ງຫລ້າສຸດກໍ່ແມ່ນງານພົບປະປີໃໝ່ (Shinnenkai) ວັນທີ11/01/08 ຢູ່ທີ່ເຮືອນຂອງອາແລງ ແລະງານພົບປະກັບທ່ານທູດ ວັນທີ27/02/08 ຢູ່ທີ່ ສູນລາວ-ຍີ່ປຸ່ນ ຫລັງຈາກງານສໍາມະນາມິດຕະພາບ, ນອກນັ້ນ, ຍັງໄດ້ຮ່ວມກັນຂາຍອາຫານເພື່ອຫາລາຍໄດ້ ໃນງານມະຫາກໍາ ຮູບເງົາຍີ່ປຸ່ນ ຢູ່ທີ່ສູນໄອເທັກ (ໜ້າເສຍດາຍ ທີ່ຫລຸບທຶນໄປໜ້ອຍໜຶ່ງ, ແຕ່ບໍ່ເປັນຫຍັງ ຄິດວ່າ ຄວາມສາມັກຄີ-ຄວາມມ່ວນຊື່ນ ເປັນກໍາໄລທີ່ ພວກເຮົາໄດ້ຮັບ). ນອກຈາກງານມ່ວນຊື່ນແລ້ວ, ຍັງມີການແນະນໍາວຽກ ໃຫ້ສະມາຊິກ ແລະອື່ນໆອີກ;

ສ່ວນວຽກງານເພື່ອສັງຄົມ ກໍ່ມີການຈັດການສໍາມະນາ ກ່ຽວກັບຫົວຂໍ້ ຕ່າງໆໃຫ້ກັບ ນັກສຶກສາຂອງມະຫາວິທະຍາໄລແຫ່ງຊາດ, ປະກອບສ່ວນ ໃນການໃຫ້ຄວາມຮູ້ກ່ຽວກັບການສຶກສາ ແລະການດໍາລົງຊີວິດຢູ່ຍີ່ປຸ່ນ ໃຫ້ກັບນັກສຶກສາທີ່ຈະໄປຮຽນຕໍ່, ໄດ້ພາກັນແປລະຄອນຍີ່ປຸ່ນເຊິ່ງໄດ້ ອອກອາກາດໃນລາຍການຂອງໂທລະພາບແຫ່ງຊາດລາວ ເລື່ອງມີຊື່ວ່າ "***ແດ່ເຈົ້າຄົນທີ່ຂ້ອຍຮັກ 愛し君へ***", ແລະໄດ້ພະຍາຍາມປະກອບສ່ວນ ໃຫ້ກັບນັກຮຽນໃນຂັ້ນປະຖົມ ແຕ່ວ່າຍັງບໍ່ທັນເປັນໂຕເປັນຕົນເທື່ອ.

ສໍາລັບກິດຈະກໍາທີ່ຈັດຮ່ວມກັບຝ່າຍຍີ່ປຸ່ນ ກໍ່ມີງານສໍາມະນາມິດຕະພາບ ລາວ-ຍີ່ປຸ່ນ(ທ້າຍເດືອນ2ທຸກໆປີ), ງານກິລາຮ່ວມກັບສະມາຄົມຄົນຍີ່ປຸ່ນ (ທ້າຍເດືອນ2), ງານແຂ່ງຂັນເວົ້າພາສາຍີ່ປຸ່ນ (ທ້າຍເດືອນ3) ແລະການ ຮ່ວມມືກັບສູນລາວ-ຍີ່ປຸ່ນ. ສ່ວນການພົວພັນກັບລັດຖະບານຍີ່ປຸ່ນ ໂດຍ ກົງກໍ່ແມ່ນ ການເຂົ້າຮ່ວມງານພົບປະຂອງອະດີດນັກສຶກສາ ຢູ່ປະເທດ ຍີ່ປຸ່ນ(ເດືອນ6ທຸກໆປີ) ແລະ ການເຂົ້າຮ່ວມກອງປະຊຸມASCOJA. ນອກຈາກນີ້ແລ້ວ ຍັງອີກອັນໜຶ່ງ ກໍ່ເປັນວຽກໜັກ ແລະຕໍ່ເນື່ອງ ເປັນເວລາຍາວ, ນັ້ນກໍ່ຄື ການບໍລິຫານ ສູນຂໍ້ມູນການຮ່ວມມື JICafe.

ວຽກງານເຫລົ່ານີ້ ເປັນຜົນງານທີ່ສະມາຊິກທຸກຄົນ ລວມທັງຄະນະບໍລິ-ຫານປະຕິບັດມາໄດ້. ຊຸດຕໍ່ໄປຈະເຮັດຫຍັງ ອັນໃດຄວນສານຕໍ່ ອັນໃດ ຄວນຍົກເລີກ ກໍ່ໃຫ້ລົມກັນຕື່ມເນາະ! (ຜູ້ສັງລວມ: ບັນຍາ ຈັນທະວົງ)

(ຕໍ່ຈາກຫນ້າ 1, ການກະກຽມ.....)

ສະພາມີພາລະບົດບາດເປັນຈຸດໃຈກາງ ໃນການແລກປ່ຽນວັດທະນະທຳ, ປະສົບການ, ຂໍ້ມູນຂ່າວສານ, ຜູກແຫນ້ນສາຍພົວພັນ ແລະ ຮອງຮັບເອົາໂຄງການຕ່າງໆ ລະຫວ່າງບັນດາປະເທດສະມາຊິກ ແລະຍີ່ປຸ່ນ.

ນອກຈາກກອງປະຊຸມໃຫຍ່ທີ່ກ່າວມາແລ້ວນັ້ນ, ຍັງມີປະຊຸມປະຈຳປີຢູ່ປະເທດຍີ່ປຸ່ນ, ມີໂຄງການແລກປ່ຽນນັກຮຽນນັກສຶກສາ(ໂຮມສະເຕ) ແລະທຶນການສຶກສາຢູ່ປະເທດຍີ່ປຸ່ນ (ສະມາຄົມເປັນຜູ້ຄັດເລືອກ ແລະ ສະເຫນີຜູ້ຮັບທຶນ). ແຕ່ຫນ້າເສຍດາຍ ທີ່ພວກເຮົາບໍ່ທັນໄດ້ເຂົ້າຮ່ວມກິດຈະກຳຕ່າງໆຂ້າງເທິງ, ເພາະມີຂໍ້ຈຳກັດ ບ່ອນວ່າ ຕ້ອງແມ່ນສະມາຊິກຂອງASCOJA ເທົ່ານັ້ນ.

ສ່ວນເອກະສານເພື່ອຂໍເຂົ້າເປັນສະມາຊິກ ກໍ່ມີໃບຄຳຮ້ອງທີ່ຂຽນຂຶ້ນເອງ, ແຜນຂອງກິດຈະກຳປະຈຳປີ, ຫນັງສືນຳສົ່ງຈາກສະຖານທູດ (ໃນປະເທດຫນຶ່ງໆ ອາດມີຫລາຍສະມາຄົມ ດັ່ງເຊັ່ນປະເທດມະເລເຊຍ ມີເຖິງ 2 ສະມາຄົມອະດີດນັກສຶກສາຈາກປະເທດຍີ່ປຸ່ນ, ຫນຶ່ງແມ່ນລັດຖະບານມະເລເຊຍສົ່ງໄປ ແລະສອງແມ່ນກຸ່ມທີ່ໄປຮຽນດ້ວຍທຶນຕົນເອງ, ແຕ່ວ່າຈາກປະເທດຫນຶ່ງ ASCOJA ຈະຮັບເອົາສະມາຊິກພຽງສະມາຄົມດຽວເທົ່ານັ້ນ) ແລະ ໃບຢັ້ງຢືນຈາກລັດຖະບານ.

ເອກະສານທີ່ພວກເຮົາຍັງຂາດຢູ່ ກໍ່ແມ່ນໂຕສຸດທ້າຍ ໂດຍສະມາຄົມກຳລັງຂໍການຊີ້ນຳຈາກຂັ້ນເທິງຢູ່ ວ່າຄອບຈະເຮັດຈັ່ງໃດຕໍ່ໄປ. ຂໍຝາກກັບຄະນະບໍລິຫານຊຸດທີ3 ຊ່ວຍເບິ່ງຊ່ວຍແຍງ ແດ່ເດີ...!

---

(ຕໍ່ຈາກຫນ້າ 9, ນ້ຳປະປາ...)

ໂຄງການດັ່ງກ່າວໃຊ້ເວລາທັງໝົດ 30ເດືອນ ແລະຈະສຳເລັດລົງໃນທ້າຍເດືອນມີນາປີ2009.

ສຳລັບໜ້າວຽກໃຫຍ່ຂອງໂຄງການ ປະກອບມີ 5ໜ້າວຽກໃຫຍ່ຄື: 1. ວຽກຂະຫຍາຍລະບົບໂຮງງານນ້ຳປະປາເກົ້າລ້ຽວ ໃຫ້ມີຄວາມອາດສາມາດຜະລິດຂຶ້ນຕື່ມອີກ 40,000ແມັດກ້ອນ/ມື້ ໂດຍການສ້າງລະບົບໂຮງງານໃໝ່ຂຶ້ນ ຊຶ່ງເທົ່າກັບເຄິ່ງນຶ່ງ ຂອງຄວາມອາດສາມາດຜະລິດຂອງໂຮງງານຈີ່ນາຍໂມ້, 2. ວຽກສ້ອມແປງລະບົບໂຮງງານນ້ຳປະປາເກົ້າລ້ຽວທີ່ມີຢູ່ແລ້ວເພື່ອໃຫ້ຜະລິດໄດ້ເຕັມຄວາມສາມາດ ຄື 20,000ແມັດກ້ອນ/ມື້, 3. ວຽກປັບປຸງໂຮງງານນ້ຳປະປາຈີ່ນາຍໂມ້ ເພື່ອໃຫ້ຜະລິດໄດ້ເຕັມ 80,000 ແມັດກ້ອນ/ມື້ ໂດຍການກໍ່ສ້າງ ອ່າງເກັບນ້ຳສະອາດຂະໜາດ 10,000 ແມັດກ້ອນຂຶ້ນຕື່ມ ພ້ອມທັງຫ້ອງໂປ້ມສູບສົ່ງ, 4. ວຽກປັບປຸງສະຖານີສູບສົ່ງຫຼັກ6 ໂດຍການປ່ຽນໂປ້ມໃໝ່ໃສ, 5. ວຽກວາງທໍ່ສົ່ງ ແລະ ທໍ່ແຈກຍາວ 0.7 ແລະ 8.6 ກິໂລແມັດ ຕາມລຳດັບ ເພື່ອສົ່ງນ້ຳປະປາ ໃຫ້ຂຶ້ນຫາອ່າງເກັບນ້ຳສູງໂດຍກົງ.



ປະທານປາລິມາ ລາຍງານສະພາບການກະກຽມເອກະສານ ຕໍ່ກອງປະຊຸມ

ໃນປັດຈຸບັນ ຄວາມຄືບໜ້າລວມຂອງວຽກກໍ່ສ້າງໂຄງການແມ່ນ ປະມານ 50% ເວົ້າສະເພາະ ວຽກໂຄງສ້າງຊຶ່ງແມ່ນວຽກທີ່ກຳລັງປະຕິບັດຢູ່ນັ້ນແມ່ນຄືບໜ້າ ປະມານ90%, ວຽກວາງທໍ່ສົ່ງຫຼັກ ແລະທໍ່ແຈກຫຼັກ ສຳເລັດ 100%, ໃນຕົ້ນປີ2009 ເມື່ອໂຄງການກໍ່ສ້າງນີ້ສຳເລັດຄວາມອາດສາມາດຜະລິດນ້ຳປະປາ ຢູ່ນະຄອນຫຼວງວຽງຈັນ ຈະເພີ່ມຂຶ້ນຈາກ 121,000 ແມັດກ້ອນ/ມື້ ມາເປັນ 161,000ແມັດກ້ອນ/ມື້ ໃນເວລານັ້ນ ປະຊາຊົນຊາວນະຄອນຫຼວງວຽງຈັນ ຈະມີນ້ຳໃຊ້ຢ່າງພຽງພໍ.

## ບົດແນະນຳສະມາຊິກ ອ້າຍຄຳມ່ອນ ຈົມສີຫາປັນຍາ



ອ້າຍຄຳມ່ອນ ຈົມສີຫາປັນຍາ
(ຮູບນີ້ ແມ່ນໂຫລດມາຈາກ ເວັບໄຊຂອງETL, ບໍ່ສະຫງວນລິຂະສິດຕິອ້າຍ)

ຢູ່ບ່ອນນີ້ ຢາກຂໍແນະນຳອ້າຍໃຫຍ່ຂອງສະມາຄົມພວກເຮົາ ອ້າຍຄຳມ່ອນ ໃຫ້ກັບສະມາຊິກໄດ້ຮູ້ຕື່ມຫນ້ອຍຫນຶ່ງ. ຄວາມຈິງແລ້ວ ກໍ່ບໍ່ຈຳເປັນຕ້ອງເວົ້າຫຍັງຫລາຍ ເພາະພວກເຮົາທຸກຄົນກໍ່ຮູ້ເພິ່ນດີແລ້ວ, ເພາະວ່າເພິ່ນກໍ່ໄດ້ໃຫ້ການຊ່ວຍເຫລືອ ໃຫ້ຄຳຊີ້ນຳ ແກ່ສະມາຄົມມາຕະຫລອດ. ແຕ່ວ່າ, ອັນທີ່ຈະເອົາມາສະເຫນີຢູ່ນີ້ ກໍ່ແມ່ນ ຂ່າວຄາວກ່ຽວກັບເພິ່ນ ໃນໄລຍະຫລັງໆນີ້ ວ່າເປັນແນວໃດ, ເພື່ອສະມາຊິກບາງຄົນ ທີ່ອາດຈະຕົກຂ່າວ.

ອ້າຍຄຳມ່ອນ ໄດ້ໄປສຶກສາຕໍ່ທີ່ປະເທດຍີ່ປຸ່ນ ໃນລະດັບປະລິນຍາໂທ ໄລຍະປີ1995ເຖິງປີ1998 ຢູ່ທີ່ Tokyo Institute of Technology ຫລື ທີ່ຮູ້ຈັກກັນດີ ໃນຫມູ່ນັກສຶກສາພວກເຮົານຳກັນວ່າ “ໂຕໂຄໂດ”, ໂດຍສຶກສາໃນສາຂາ Information Processing Technology. ໄລຍະຕົ້ນປີ2008 ສົດໆຮ້ອນໆນີ້, ມີ2ເຫດການທີ່ມີຄວາມສຳຄັນຕໍ່ເພິ່ນ ກໍ່ຄືຕໍ່ສະມາຄົມຂອງພວກເຮົາ, ອັນທີຫນຶ່ງກໍ່ແມ່ນເພິ່ນໄດ້ຖືກແຕ່ງຕັ້ງໃຫ້ເປັນ ຮອງປະທານສະມາຄົມມິດຕະພາບລາວ-ຍີ່ປຸ່ນ ທີ່ເປັນສະມາຄົມແມ່ຂອງ”ຈາວໂອນ” ແລະເປັນຜູ້ຮັບຜິດຊອບຊີ້ນຳວຽກງານຂອງ”ຈາວໂອນ”ໂດຍກົງ, ອັນທີສອງ ກໍ່ແມ່ນເພິ່ນໄດ້ເປັນ ຜູ້ອຳນວຍການໃຫຍ່ຂອງບໍລິສັດ ລັດວິສາຫະກິດໂທລະຄົມລາວ (ETL). ນອກນີ້ກໍ່ຍັງມີອີກຫລາຍຢ່າງ, ແຕ່ຂໍແນະນຳພຽງເທົ່ານີ້ເນາະ. ທ້າຍສຸດນີ້, ໃນນາມຂອງຄະນະຈັດເຮັດຈົດຫມາຍຂ່າວກໍ່ຄືໃນນາມຂອງຄະນະບໍລິຫານສະມາຄົມ ຂໍຖືໂອກາດນີ້ ສະແດງຄວາມຍິນດີກັບອ້າຍຄຳມ່ອນເດີ!!

(ຕໍ່ຈາກຫນ້າ5, ການເຂົ້າຮ່ວມ...) ໂດຍການຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ ດ້ວຍຕົນເອງ. ຮູບທີ່ຖ່າຍຢູ່ຫໍພັກKomabaນີ້ ແມ່ນເປັນງານລ້ຽງອົບອຸ່ນກັບບັນດານັກສຶກສາທີ່ນອນຢູ່ຫໍພັກ, ນັກສຶກສາທີ່ອາໃສຢູ່ ອ້ອມແອ້ມໂຕກຽວ ແລະຜູ້ທີ່ຈົບແລ້ວ ກຳລັງເຮັດວຽກຢູ່ ກໍ່ໄດ້ເຂົ້າມາຮ່ວມນຳ. ງານນີ້ ຖືວ່ານ້ອງໆທັງຫລາຍ, ໄດ້ຟັງການເທດສະຫນາ ຂອງອ້າຍໃຫຍ່ຈັນຊະນະ ໄປຫລາຍເຕີບ. ຢູ່ທີ່ນີ້, ກໍ່ຂໍຝາກຂອບໃຈນ້ອງໆ ຢູ່ຫໍພັກKomaba ທີ່ໄດ້ໃຫ້ໂອກາດພວກອ້າຍ "ສິງ" ຢູ່ນັ້ນເປັນເວລາຫລາຍວັນ. ພິເສດ ຂໍຊົມເຊີຍນ້ອງຊາຍ ທ້າວວັນໄຊ ທີ່ສາມາດ ທົນຕໍ່ສຽງກົນ ຂອງພວກອ້າຍທັງສອງໄດ້. ຂອບໃຈເດີ! ສ່ວນສະມາຊິກ2ຄົນ ຜູ້ທີ່ຈະໄປຮ່ວມໃນປີ2008ນີ້ ແມ່ນໄດ້ຄັດເລືອກຕາມເງື່ອນໄຂ ແລະຜ່ານກອງປະຊຸມເປັນທີ່ຮຽບຮ້ອຍແລ້ວ.

# ການເຄື່ອນໄຫວຕ່າງໆ ໃນມໍ່ໆນີ້

| ລາຍການ | ຜູ້ຮັບຜິດຊອບ |
|---|---|
| 1. ງານລ້ຽງປີໃຫມ່ລາວ ວັນທີ5ເດືອນ4ປີ2008 | ຄະນະສະເພາະກິດ |
| 2. ການເຊັນສັນຍາໃຫມ່ກັບຫ້ອງການໄຈກ້າ ກ່ຽວກັບການບໍລິຫານJICafe | ປາວີນາ |
| 3. ຈັດວາງສະແດງຂໍ້ມູນຂ່າວສານຢູ່ທີ່ ສູນຮ່ວມມືລາວ-ຍີ່ປຸ່ນ | ບັນດາໄຊ |
| 4. ກອງປະຊຸມໃຫຍ່ປະຈຳປີ2008, ວັນທີ31ເດືອນ5 (ບໍ່ທັນແນ່ນອນ) | ຄະນະສະເພາະກິດ |
| 5. ຈັດພິມຂໍ້ມູນສະມາຊິກ ແລະສົ່ງໃຫ້ສະມາຊິກທຸກໆຄົນ | ບໍ່ທັນມີ |
| .... ແລະອື່ນໆອີກ | |

# ບົດມ້ວນທ້າຍຈາກຄະນະຈັດພິມ

ຈົດຫມາຍຂ່າວ ສະບັບນີ້ ເປັນສະບັບທີ4, ເຊິ່ງສະບັບທຳອິດ ໄດ້ຈັດພິມອອກມາປະມານເດືອນ9ປີ2003 (12ຫນ້າ), ສະບັບທີສອງ ອອກມາໃນເດືອນ6ປີ2006 (4ຫນ້າ), ສະບັບທີສາມ ອອກມາໃນເດືອນ3ປີ2007 (6ຫນ້າ) ແລະສະບັບນີ້ ອອກມາໃນເດືອນ3ປີ2008 (12ຫນ້າ).

ສະບັບທຳອິດ ຫມອດອ້າຍໃຫຍ່ ເພິ່ນໄດ້ໃສ່ໄວ້ວ່າ ເປັນສະບັບທົດລອງ, ແຕ່ວ່າ ເນື້ອຫາແມ່ນ ດຸເດືອດຂ້ຽວຂົ້ນຫລາຍ, ເປັນສະບັບທຳອິດທີ່ອອກມາ ພາຍຫລັງຄະນະບໍລິຫານຊຸດທີ1 ຖືກແຕ່ງຕັ້ງຢ່າງເປັນທາງການ ຈາກສະມາຄົມມິດຕະພາບ ລາວ-ຍີ່ປຸ່ນ ສູນກາງ. ຫລັງຈາກນັ້ນ, ຈົດຫມາຍຂ່າວຂອງພວກເຮົາ ກໍ່ໄດ້ງຽບຫາຍໄປ, ຈົນມາເຖິງປີ2006 ເຊິ່ງທາງສະຖານທູດ ກໍ່ໄດ້ໃຫ້ການສະຫນັບສະຫນູນ ແລະຊຸກຍູ້ ຈຶ່ງມາໄດ້ພິມປະມານເດືອນ6ປີ2006 ເຊິ່ງກ່ອນການເລືອກຕັ້ງຄະນະບໍລິຫານຊຸດທີ2 ບໍ່ພໍເທົ່າໃດວັນ. ສະບັບທີສາມ ກໍ່ແມ່ນທ້າຍເດືອນ3 ແລະສະບັບທີສີ່ ກໍ່ແມ່ນທ້າຍເດືອນ3 ເຊັ່ນດຽວກັນ.

ຢູ່ນີ້ ຂໍເວົ້າແບບບໍ່ອາຍຜູ້ໃດ, ສາເຫດທີ່ຈັດພິມອອກມາໃນທ້າຍເດືອນ3 ກໍ່ເພາະວ່າ, ງົບປະມານຂອງຍີ່ປຸ່ນ ເພິ່ນປິດທ້າຍເດືອນ3, ຖ້າເຮັດບໍ່ທັນ ກໍ່ບໍ່ສາມາດ ເອົາງົບປະມານ ທີ່ເພິ່ນສະຫນັບສະຫນູນມາໃຊ້ໄດ້...

ຫມາຍຄວາມວ່າ, ທຸກໆປີ ສະຖານທູດຍີ່ປຸ່ນ ຈະເປັນຜູ້ ເຕືອນພວກເຮົາ ຖາມພວກເຮົາ ວ່າຈົດຫມາຍຂ່າວ ເປັນແນວໃດແລ້ວ ໄປຮອດໃສແລ້ວ.. ບາງເທື່ອ ກໍ່ເຮັດໃຫ້ເກີດມີຄຳຖາມທີ່ວ່າ ຈົດຫມາຍຂ່າວນີ້, ພວກເຮົາພິມອອກມາກໍ່ເພື່ອສະມາຄົມເພື່ອສະມາຊິກພວກເຮົາເອງ, ເປັນຫຍັງຕ້ອງຖ້າໃຫ້ເພິ່ນບອກເພິ່ນກ່າວ ມັນຈິ່ງຊິເກີດ ຈິ່ງຊິແລ້ວ.

ທີ່ກ່າວມາ, ກໍ່ບໍ່ໄດ້ມີຈຸດປະສົງຫຍັງອື່ນ ພຽງແຕ່ຢາກໃຫ້ສະມາຊິກທຸກຄົນຄິດນຳກັນ ເຮັດແນວໃດ ພວກເຮົາຈິ່ງສາມາດ ແຈກຍາຍຂໍ້ມູນຂ່າວສານ ໃຫ້ກັນໄດ້ທົ່ວເຖິງ, ເວລາເຮັດຫຍັງ ກໍ່ຢາກໃຫ້ເກັບຮູບຖ່າຍຮອຍໄວ້ຊ່ວຍກັນ, ຖ້າເປັນໄປໄດ້ກໍ່ຂຽນຂໍ້ຄວາມບົດຄວາມໄວ້ນຳ ກໍ່ຍິ່ງສະດວກໃນເວລາເອົາມາຮຽບຮຽງ, ຫວັງຢ່າງຍິ່ງວ່າ ຈົດຫມາຍຂ່າວສະບັບທີຫ້າຂອງພວກເຮົາຈະສາມາດຈັດພິມອອກມາກ່ອນ ເດືອນ3ປີ2009 ເນາະ!!.

ທ້າຍສຸດນີ້, ກໍ່ຂໍສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງສະມາຊິກທຸກໆທ່ານ ທີ່ໄດ້ປະກອບສ່ວນຮູບຖ່າຍ, ບົດຄວາມ, ເນື້ອໃນຕ່າງໆ; ປະກອບສ່ວນຄຳຄິດຄຳເຫັນ, ດັດແກ້ ຈົນຈົດຫມາຍຂ່າວສະບັບທີສີ່ນີ້ສຳເລັດສົມບູນໄດ້.

ຕ່າງຫນ້າຄະນະຈັດພິມ: ປັນຍາ ຈັນທະວົງ

ຈົດຫມາຍຂ່າວສະບັບນີ້ ຈັດພິມໂດຍພາຍໃຕ້ການສະຫນັບສະຫນູນ ຂອງສະຖານທູດຍີ່ປຸ່ນປະຈຳ ສປປ.ລາວ. ຈຳນວນ 200ສະບັບ. ຂໍຖືໂອກາດນີ້ຮຽນຂອບໃຈ ມາຍັງສະຖານທູດຍີ່ປຸ່ນປະຈຳລາວ ເປັນຢ່າງສູງ.

ສະມາຄົມອະດີດ ນັກສຶກສາລາວ ຈາກຍີ່ປຸ່ນ

JAOL Japan Alumni Of Laos

ラオス元日本留学生会

ກະລຸນາກອດເບິ່ງເວັບໄຊຂອງພວກເຮົາ ແລະສົ່ງເມວມາໄດ້ທີ່
Email: **JAOL@yahoogroups.jp** (Committee Board)
http://asia.geocities.com/jaolweb

ທີ່ຢູ່ຊົ່ວຄາວ:
Lao-Japan Center, National University of Laos
Dongdok campus, PB. 7322